ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ປະທານປະເທດ

ເລກທີ 029 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 17.01.2013

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການຈະລາຈອນທາງບົກ ສະບັບປັບປຸງ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 035/ສພຊ, ລົງວັນທີ 12 ທັນວາ 2012;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 04/ຄປຈ, ລົງວັນທີ 04 ມັງກອນ 2013;

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1. ປະກາດໃຊ້ກົດໝາຍ ວ່າດ້ວຍການຈະລາຈອນທາງບົກ ສະບັບປັບປຸງ.

ມາດຕາ 2. ລັດຖະດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດແຫ່ງ ສປປ ລາວ.**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານປະເທດ

ຈູມມາລີ ໄຊຍະສອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ສະພາແຫ່ງຊາດ

ເລກທີ 035 /ສພຊ

# ມະຕິຕົກລົງ

ຂອງ

ສະພາແຫ່ງຊາດ ແຫ່ງ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ການຈະລາຈອນທາງບົກ ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍ ການຈະລາຈອນທາງບົກ ສະບັບປັບປຸງ ໃນວາລະກອງປະຊຸມຕອນເຊົ້າຂອງວັນທີ 12 ທັນວາ 2012

### ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1</u>. ຮັບຮອງເອົາ ກົດໝາຍວ່າດ້ວຍ ການຈະລາຈອນທາງບົກ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

<u>ມາດຕາ 2</u>. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 12 ທັນວາ 2012

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------------

ສະພາແຫ່ງຊາດ ເລກທີ 23 /ສພຊ

ນະຄອນຫຼວງວຽງຈັນ ວັນທີ 12 ທັນວາ 2012

# ກົດໝາຍ

# ວ່າດ້ວຍ ການຈະລາຈອນທາງບົກ

# ( ສະບັບປັບປຸງ )

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຈະລາຈອນທາງບົກ ເພື່ອອຳນວຍຄວາມສະດວກ, ຄວບຄຸມການສັນຈອນ ແລະ ການນຳໃຊ້ຍານພາຫະນະ ຕາມເສັ້ນທາງບົກ ໃຫ້ມີຄວາມສະດວກ, ໂລ່ງລ່ຽນ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍ ແນໃສ່ຫຼຸດຜ່ອນອຸບປະຕິເຫດ, ຄວາມແອອັດໃນການສັນຈອນ ຕິດພັນກັບການບໍລິການ, ການປົກປັກຮັກສາເສັ້ນທາງ, ສິ່ງແວດລ້ອມ, ຊີວິດ, ຊັບສິນຂອງບຸກຄົນ ແລະ ສາທາລະນະ ປະກອບສ່ວນເຂົ້າໃນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ການເຊື່ອມໂຍງກັບສາກົນ.

**ມາດຕາ 2 (ໃໝ່) ການຈະລາຈອນທາງບົກ**

ການຈະລາຈອນທາງບົກ ແມ່ນ ການສັນຈອນໄປ ມາ ຂອງຄົນ ແລະ ສັດ ດ້ວຍການນຳໃຊ້ ຫຼື ບໍ່ນຳໃຊ້ພາຫະນະ ແລະ ຍານພາຫະນະຊະນິດຕ່າງໆ ຕາມເສັ້ນທາງບົກ ໂດຍປະຕິບັດກົດຈະລາຈອນ ຢ່າງຖືກຕ້ອງ.

ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ

**ຄຳສັບ** ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ **ຄວາມໝາຍ** ດັ່ງນີ້:

1. **ກົດຈະລາຈອນ ໝາຍເຖິງ** ລະບຽບການລະອຽດ ກ່ຽວກັບການຈະລາຈອນທາງບົກ;

2. **ປ້າຍຈະລາຈອນ ໝາຍເຖິງ** ເຄື່ອງໝາຍຊີ້ບອກ ການປະຕິບັດກົດຈະລາຈອນຕາມເສັ້ນທາງບົກ;

3. **ເຄື່ອງໝາຍຈະລາຈອນ ໝາຍເຖິງ** ສິ່ງຊີ້ບອກ ກົດຈະລາຈອນຕາມເສັ້ນທາງບົກດ້ວຍການຕິດຕັ້ງປ້າຍ, ຂີດ, ຂຽນ, ແຕ້ມໄວ້ຕາມໜ້າທາງ, ບ່າທາງ, ຂອບທາງ, ແຄມທາງ ແລະ ເທິງທາງ;

4. **ໃບຂັບຂີ່ຍານພາຫະນະ ໝາຍເຖິງ** ໃບອະນຸຍາດໃຫ້ຂັບຂີ່ຍານພາຫະນະ ທີ່ອອກໃຫ້ໂດຍຂະແໜງການໂຍທາທິການ ແລະ ຂົນສົ່ງ;

5. **ຜູ້ນຳໃຊ້ເສັ້ນທາງ ໝາຍເຖິງ** ຜູ້ຂັບຂີ່ ຫຼື ນຳໃຊ້ຍານພາຫະນະ, ຄົນຍ່າງ, ຜູ້ຄວບຄຸມສັດ, ຜູ້ອະນາໄມ, ຜູ້ສ້ອມແປງ, ຜູ້ຕິດຕັ້ງປ້າຍ ແລະ ເຄື່ອງໝາຍຈະລາຈອນ ຕາມເສັ້ນທາງບົກ;

6. **ເສັ້ນທາງ ໝາຍເຖິງ** ຂອບເຂດພື້ນທີ່ ຊຶ່ງໄດ້ກໍ່ສ້າງຂຶ້ນເພື່ອຮັບໃຊ້ໃຫ້ແກ່ການຈະລາຈອນທາງບົກ;

7. **ຖະໜົນ ໝາຍເຖິງ** ພື້ນທີ່ຂອງເສັ້ນທາງ ຫຼື ທົ່ນທາງ ທັງໝົດ ທີ່ນຳໃຊ້ສຳລັບການຈະລາຈອນທາງບົກ ໃນຕົວເມືອງ;

8. **ໜ້າທາງ ໝາຍເຖິງ** ພື້ນທີ່ຂອງເສັ້ນທາງ ທີ່ນຳໃຊ້ສຳລັບການສັນຈອນຂອງຍານພາຫະນະ;

9. **ຊ່ອງຈະລາຈອນ ໝາຍເຖິງ** ພື້ນທີ່ຂອງເສັ້ນທາງ ທີ່ແບ່ງຂອບເຂດໜ້າທາງຕາມລວງຍາວຂອງເສັ້ນທາງ ແລະ ມີຄວາມກວ້າງຕາມມາດຕະຖານທີ່ກຳນົດ;

10. **ທາງຄົບ ໝາຍເຖິງ** ເສັ້ນທາງທີ່ຕັດກັນ ຫຼື ຄົບກັນ ຢູ່ໃນລະດັບໜ້າທາງດຽວກັນນັບແຕ່ສອງເສັ້ນຂຶ້ນໄປ;

11. **ທາງແຍກ ໝາຍເຖິງ** ເສັ້ນທາງທີ່ແຍກອອກເປັນຫຼາຍເສັ້ນທາງ;

12. **ຢຸດລົດ ໝາຍເຖິງ** ຢຸດເຄື່ອນໄຫວຍານພາຫະນະຢູ່ຈຸດທີ່ກຳນົດຕາມເສັ້ນທາງ ຫຼື ຖະໜົນໃນເວລາອັນສັ້ນ ໂດຍບໍ່ມອດຈັກ ແລະ ຜູ້ຂັບຂີ່ຕ້ອງປະຈຳຢູ່ຕຳແໜ່ງຂອງຄົນຂັບ;

13. **ຈອດລົດ ໝາຍເຖິງ** ຢຸດເຄື່ອນໄຫວຢູ່ຈຸດທີ່ກຳນົດຕາມເສັ້ນທາງ ຫຼື ຖະໜົນໂດຍມອດຈັກ ແລະ ຜູ້ຂັບຂີ່ສາມາດອອກຈາກຍານພາຫະນະໄດ້;

14. **ລົດຫົວລາກ ໝາຍເຖິງ** ຍານພາຫະນະທີ່ມີລະບົບຂັບເຄື່ອນດ້ວຍເຄື່ອງຈັກ ນຳໃຊ້ສຳລັບແກ່ເຄິ່ງຫາງລາກ;

15. **ເຄິ່ງຫາງລາກ ໝາຍເຖິງ** ພາຫະນະ ທີ່ເກາະໃສ່ລົດຫົວລາກ;

16. **ຫາງລາກ ໝາຍເຖິງ** ພາຫະນະ ທີ່ເກາະໃສ່ລົດຂົນສົ່ງທົ່ວໄປ;

17. **ການສັນຈອນພິເສດ ໝາຍເຖິງ** ການສັນຈອນຂອງຂະບວນລົດຜູ້ນໍາ, ແຂກຕ່າງປະເທດ, ລົດໂຮງໝໍ, ລົດມອດໄຟ, ລົດກູ້ໄພ, ລົດຂອງກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ມີລະບົບສັນຍານແຈ້ງເຕືອນ ຊຶ່ງກໍາລັງປະຕິບັດໜ້າທີ່ອັນຮີບດ່ວນ;

18. **ເຂດຊຸມຊົນ ໝາຍເຖິງ** ບໍລິເວນທີ່ມີປະຊາຊົນອາໄສຢູ່ຢ່າງໜາແໜ້ນ;

19. **ຍານພາຫະນະ ໝາຍເຖິງ** ພາຫະນະທີ່ແລ່ນດ້ວຍເຄື່ອງຈັກ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານຈະລາຈອນທາງບົກ**

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການພັດທະນາ, ກໍ່ສ້າງ, ບູລະນະ, ຕິດຕັ້ງ ແລະ ປົກປັກຮັກສາລະບົບການຈະລາຈອນທາງບົກໃຫ້ມີປະສິດທິຜົນ ແລະ ຍືນຍົງໂດຍນໍາໃຊ້ວິທະຍາສາດ, ເຕັກນິກ ແລະ ເຕັກໂນໂລຊີ ທີ່ທັນສະໄໝ.

ລັດ ຊຸກຍູ້ ແລະ ສົ່ງເສີມ ໃຫ້ມີການພັດທະນາວຽກງານຂົນສົ່ງມວນຊົນໃນຕົວເມືອງ ເພື່ອຮັບປະກັນການຈະລາຈອນໃນຕົວເມືອງມີຄວາມສະດວກ, ໂລ່ງລ່ຽນ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍ ພ້ອມທັງບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ເປັນຕົວເມືອງທີ່ໜ້າຢູ່.

**ມາດຕາ 5 (ປັບປຸງ) ຫຼັກການ ກ່ຽວກັບວຽກງານຈະລາຈອນທາງບົກ**

**ວຽກງານຈະລາຈອນທາງບົກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:**

1. ຮັບປະກັນຄວາມສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນດໍາເນີນງານຄວາມປອດໄພທາງຖະໜົນ ເພື່ອເຮັດໃຫ້ວຽກງານຈະລາຈອນທາງບົກ ມີລະບົບກົມກຽວ ແລະ ກ້າວໄປສູ່ຄວາມທັນສະໄໝ;

2. ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ຄວາມປອດໄພ, ຄວາມສະດວກ, ໂລ່ງລ່ຽນ, ຕໍ່ເນື່ອງ, ມີປະສິດທິຜົນ ດ້ວຍຄວາມຮັບຜິດຊອບ ແລະ ການມີສ່ວນຮ່ວມ ຂອງບຸກຄົນ ແລະ ການຈັດຕັ້ງໃນທົ່ວສັງຄົມ;

3. ຮັບປະກັນຄວາມເປັນເອກະພາບ ໃນຂອບເຂດທົ່ວປະເທດ ແລະ ການແບ່ງຂັ້ນຄຸ້ມຄອງ ລະຫວ່າງຂະແໜງການ ຢູ່ ສູນກາງ ແລະ ທ້ອງຖິ່ນ ບົນພື້ນຖານການປະສານສົມທົບ ຢ່າງໃກ້ຊິດ;

4. ຮັບປະກັນການຄຸ້ມຄອງ ແລະ ນໍາໃຊ້ຍານພາຫະນະ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ໄດ້ມາດຕະຖານເຕັກນິກ ແລະ ມີຄວາມປອດໄພ;

5. ຮັບປະກັນ ຄວາມສອດຄ່ອງຂອງກິດຈະລາຈອນທາງບົກ ຂອງ ສປປ ລາວ ກັບພາກພື້ນ ແລະ ສາກົນ ຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ມາດຕາ 6 (ປັບປຸງ) **ພັນທະຂອງຜູ້ນຳໃຊ້ເສັ້ນທາງ**

ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຄົນຕ່າງປະເທດ ທີ່ສັນຈອນຕາມເສັ້ນທາງ ຢູ່ໃນດິນແດນ ຂອງ ສປປ ລາວ ຕ້ອງເຄົາລົບ ແລະ ປະຕິບັດຕາມກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ, ພ້ອມກັນນັ້ນ ກໍຕ້ອງປະກອບສ່ວນໃນການປົກປັກຮັກສາ, ບູລະນະພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກດ້ານການຈະລາຈອນທາງບົກ.

ມາດຕາ 7 (ໃໝ່) **ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ກ່ຽວຂ້ອງກັບການຄຸ້ມຄອງການຈະລາຈອນ, ການກໍ່ສ້າງພື້ນຖານໂຄງລ່າງ ແລະ ສິ່ງອຳນວຍຄວາມສະດວກ, ການດຳເນີນກິດຈະການດ້ານການຈະລາຈອນທາງບົກ ຢູ່ ສປປ ລາວ.

ມາດຕາ 8 (ໃໝ່) **ການຮ່ວມມືສາກົນ**

ລັດ ເປີດກວ້າງ ແລະ ສົ່ງເສີມການພົວພັນ, ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຈະລາຈອນທາງບົກ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ວິທະຍາສາດເຕັກນິກ ແລະ ເຕັກໂນໂລຊີ, ການສ້າງ, ບຳລຸງ, ຍົກລະດັບພະນັກງານ, ການຍາດແຍ່ງການຊ່ວຍເຫຼືອ, ການຮ່ວມມືດ້ານການລົງທຶນ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II
# ການຈະລາຈອນທາງບົກ
## ໝວດທີ 1
## ລະບຽບການຈະລາຈອນທາງບົກ

ມາດຕາ 9 (ປັບປຸງ) **ລະບຽບການທົ່ວໄປ**

ໃນການຈະລາຈອນທາງບົກ ຢູ່ ສປປ ລາວ ໃຫ້ໃຊ້ກ້ຳຂວາ, ຜູ້ນຳໃຊ້ເສັ້ນທາງ ຕ້ອງໄປຕາມຊ່ອງຈະລາຈອນ ຕາມທິດທາງທີ່ກຳນົດ ແລະ ຕ້ອງປະຕິບັດຕາມກົດໝາຍສະບັບນີ້ ແລະ ກົດຈະລາຈອນຢ່າງເຂັ້ມງວດ.

ກົດຈະລາຈອນທາງບົກ ຕ້ອງໄດ້ຈັດເຂົ້າໃນຫຼັກສູດການຮຽນ-ການສອນ ໃນແຕ່ລະຊັ້ນຮຽນ ລວມທັງລະບົບອະນຸບານ, ສາມັນ ແລະ ວິຊາຊີບ ແລະ ຈັດຕັ້ງເຜີຍແຜ່ໃຫ້ທົ່ວສັງຄົມໄດ້ຮັບຮູ້ດ້ວຍຫຼາຍຮູບການ.

### ມາດຕາ 10 (ໃໝ່) ລະບຽບການສຳລັບຄົນຍ່າງ

**ການຍ່າງຕາມທາງ ແລະ ຍ່າງຂ້າມທາງ ໃນຕົວເມືອງ, ເທດສະບານ ໃຫ້ປະຕິບັດ ດັ່ງນີ້:**

- ຍ່າງໄປຕາມທາງ ທີ່ໄດ້ກຳນົດໄວ້ສຳລັບໃຫ້ຄົນຍ່າງ, ຖ້າຫາກບໍ່ມີທາງສຳລັບຄົນຍ່າງ ກໍໃຫ້ຍ່າງລຽບຕາມແຄມທາງເບື້ອງຊ້າຍ ເພື່ອໃຫ້ສາມາດແນມເຫັນລົດ ທີ່ແລ່ນເຂົ້າມາຫາຕົນ, ຖ້າຫາກມີຫຼາຍຄົນຍ່າງນຳກັນ ໃຫ້ຍ່າງຕາມຫຼັງກັນເປັນແຖວດຽວ ແລະ ແນບເຂົ້າແຄມທາງ ຍົກເວັ້ນການສວນສະໜາມ, ຂະບວນທາງການ, ຂະບວນແຫ່ພິທີທາງສາສະໜາ, ສົ່ງສະການ ຫຼື ຂະບວນຍ່າງອື່ນ ທີ່ໄດ້ຮັບອະນຸຍາດ;
- ຍ່າງຂ້າມຕາມທາງມ້າລາຍ, ບ່ອນມີໄຟສັນຍານ, ຂົວຂ້າມທາງ, ອຸໂມງ ຫຼື ບ່ອນທີ່ກຳນົດໄວ້, ຖ້າຫາກບໍ່ມີບ່ອນຂ້າມຕາມທີ່ໄດ້ກຳນົດໄວ້ນີ້ ໃຫ້ຍ່າງຂ້າມທາງຢູ່ບ່ອນທີ່ເຫັນວ່າມີຄວາມປອດໄພ.

ທຸກຄົນ ມີໜ້າທີ່ຊ່ວຍເຫຼືອ ເດັກນ້ອຍ, ຜູ້ເຖົ້າ, ຄົນພິການ ແລະ ຜູ້ບໍ່ສາມາດຊ່ວຍຕົນເອງໄດ້ໃນເວລາຍ່າງຂ້າມທາງ.

### ມາດຕາ 11 (ປັບປຸງ) ລະບຽບການຄຸ້ມຄອງສັດລ້ຽງ

ບໍ່ອະນຸຍາດໃຫ້ລ້ຽງ ແລະ ປ່ອຍສັດທຸກຊະນິດ ຕາມເສັ້ນທາງຫຼວງ.

ການເຄື່ອນຍ້າຍສັດຕາມເສັ້ນທາງ ຕ້ອງມີຜູ້ຄວບຄຸມ ແລະ ຕ້ອງປະຕິບັດຕາມກົດຈະລາຈອນ.

ໃນກໍລະນີ ເກີດອຸບປະຕິເຫດຍ້ອນສັດລ້ຽງ ເຈົ້າຂອງ ຫຼື ຜູ້ຄອບຄອງສັດ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ສັດລ້ຽງນັ້ນໄດ້ກໍ່ຂຶ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ.

ຢູ່ບ່ອນທີ່ມີການລ້ຽງ ຫຼື ຍ້າຍສັດຕາມເສັ້ນທາງຢ່າງເປັນປະຈຳ ຕ້ອງມີປ້າຍເຕືອນ ໃຫ້ລະວັງສັດ ເພື່ອໃຫ້ຜູ້ຂັບຂີ່ມີຄວາມລະມັດລະວັງ. ໃນກໍລະນີເກີດອຸບປະຕິເຫດໃນເຂດທີ່ມີປ້າຍເຕືອນນັ້ນ ຜູ້ຂັບຂີ່ ຕ້ອງຮັບຜິດຊອບຕໍ່ຄວາມເສຍຫາຍ ທີ່ເກີດຂຶ້ນ.

### ມາດຕາ 12 (ໃໝ່) ລະບຽບການສຳລັບຜູ້ຂັບຂີ່

**ຜູ້ຂັບຂີ່ຍານພາຫະນະທຸກຊະນິດ ມີ ໜ້າທີ່ ແລະ ຄວາມຮັບຜິດຊອບ ຕົ້ນຕໍ ດັ່ງນີ້:**

- ຕ້ອງມີເອກະສານທີ່ຈຳເປັນ ເປັນຕົ້ນ ໃບຂັບຂີ່, ໃບທະບຽນ, ໃບກວດກາເຕັກນິກ, ໃບເສຍຄ່າທາງ, ໃບປະກັນໄພ; ສຳລັບລົດຂົນສົ່ງສິນຄ້າ ແລະ ໂດຍສານ ຍັງຕ້ອງມີເອກະສານອື່ນທີ່ກ່ຽວຂ້ອງ;
- ກວດກາສະພາບເຕັກນິກລົດ ເປັນປະຈຳ ເພື່ອຮັບປະກັນຄວາມປອດໄພ ແລະ ບໍ່ໃຫ້ລົດເກີດຂັດຂ້ອງໃນເວລາເດີນທາງ;
- ໃຫ້ຄວາມຮ່ວມມື ແລະ ອຳນວຍຄວາມສະດວກໃນການກວດກາຂອງເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ;

- ແຈ້ງເຈົ້າໜ້າທີ່ຕຳຫຼວດຈະລາຈອນ, ໃຫ້ຄວາມຊ່ວຍເຫລືອແກ່ຜູ້ໄດ້ຮັບບາດເຈັບ ເມື່ອພົບເຫັນອຸບປະຕິເຫດ;

- ຢຸດ ແລະ ປ່ອຍທາງໃຫ້ແກ່ການສັນຈອນພິເສດ;

- ໃຫ້ບູລິມະສິດແກ່ຄົນຍ່າງຂ້າມທາງ;

- ຍົກຍ້າຍຍານພາຫະນະ ອອກຈາກຊ່ອງທາງການຈະລາຈອນໂດຍດ່ວນ ໃນກໍລະນີ ຍານພາຫະນະຕິດຂັດ, ເປ່ເພ ຢູ່ຕາມເສັ້ນທາງ.

## ໝວດທີ 2
## ການຂັບຂີ່ຍານພາຫະນະ

ມາດຕາ 13 (ໃໝ່) **ເງື່ອນໄຂຂອງການສອບເສັງເອົາໃບຂັບຂີ່**

**ການສອບເສັງເອົາໃບຂັບຂີ່ ຕ້ອງມີເງື່ອນໄຂ ດັ່ງນີ້:**

- ມີໃບຢັ້ງຢືນຈົບຫຼັກສູດ ການຮຽນຂັບລົດ;
- ມີໃບຢັ້ງຢືນສຸຂະພາບ;
- ມີອາຍຸ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 14 ຂອງກົດໝາຍສະບັບນີ້.

ການສອບເສັງ ແລະ ການອອກໃບຂັບຂີ່ ຕ້ອງປະຕິບັດຕາມລະບຽບການຂອງ ກະຊວງ ໂຍທາທິການ ແລະ ຂົນສົ່ງ ຢ່າງເຂັ້ມງວດ.

ເງື່ອນໄຂຂອງການສອບເສັງເອົາໃບຂັບຂີ່ ສຳລັບຄົນພິການ ແລະ ເສັຍອົງຄະ ໄດ້ກຳນົດ ໄວ້ໃນລະບຽບການສະເພາະ.

ມາດຕາ 14 (ປັບປຸງ) **ອາຍຸຂອງຜູ້ສອບເສັງເອົາໃບຂັບຂີ່**

**ຜູ້ສອບເສັງເອົາໃບຂັບຂີ່ລົດແຕ່ລະປະເພດ ຕ້ອງມີປະສົບການ ແລະ ມີ ອາຍຸ ດັ່ງນີ້:**

- ແຕ່ ສິບຫ້າ ປີຂຶ້ນໄປ ສຳລັບລົດຈັກ ຄວາມແຮງບໍ່ເກີນ 125 cc;
- ແຕ່ ສິບແປດ ປີ ຂຶ້ນໄປ ສຳລັບລົດຈັກ ຄວາມແຮງ ແຕ່ 125 cc ຂຶ້ນໄປ, ລົດສາມລໍ້, ລົດໄຖນາທີ່ແກ່ລໍ້, ລົດຕໍ່ອກໆ, ລົດຂົນສົ່ງສ່ວນຕົວ ແລະ ລົດຂົນສົ່ງສະເພາະ ບໍ່ເກີນ ເກົ້າ ບ່ອນນັ່ງ ລວມທັງຜູ້ຂັບຂີ່ ຫຼື ນ້ຳໜັກລວມບໍ່ເກີນ 3.500 ກິໂລກຣາມ, ລົດຂົນສົ່ງໂດຍສານ ບໍ່ເກີນ ເກົ້າ ບ່ອນນັ່ງ ລວມທັງຜູ້ຂັບຂີ່;
- ແຕ່ ຊາວເອັດ ປີ ຂຶ້ນໄປ ສຳລັບລົດຂົນສົ່ງສິນຄ້າ, ເຄື່ອງຂອງ ທີ່ມີນ້ຳໜັກ ລວມແຕ່ 3.500 ກິໂລກຣາມ ເຖິງ 7.000 ກິໂລກຣາມ, ລົດໄຖນາໃຫຍ່, ລົດຂົນສົ່ງໂດຍສານ ບໍ່ເກີນ ສິບຫ້າ ບ່ອນນັ່ງ ລວມທັງຜູ້ຂັບຂີ່, ລົດຫົວລາກທີ່ແກ່ເຄິ່ງຫາງລາກ;
- ແຕ່ ຊາວຫ້າ ປີ ຂຶ້ນໄປ ສຳລັບລົດຂົນສົ່ງສິນຄ້າ, ເຄື່ອງຂອງ ທີ່ມີນ້ຳໜັກລວມ ບໍ່ເກີນ 15.000 ກິໂລກຣາມ, ລົດຫົວລາກທີ່ແກ່ເຄິ່ງຫາງລາກ, ລົດຂົນສົ່ງທົ່ວໄປທີ່ແກ່ຫາງລາກ ນ້ຳໜັກລວມບໍ່ເກີນ 750 ກິໂລກຣາມ, ລົດຂົນສົ່ງໂດຍສານ ບໍ່ເກີນ ສາມສິບຫ້າ ບ່ອນນັ່ງ;

- ແຕ່ ຊາວແປດ ປີ ຂຶ້ນໄປ ສຳລັບລົດຂົນສົ່ງສິນຄ້າ ນ້ຳໜັກບັນທຸກເກີນ 15.000 ກິໂລກຣາມ, ລົດຫົວລາກທີ່ແກ່ເຄິ່ງທາງລາກ, ລົດຂົນສົ່ງທົ່ວໄປທີ່ແກ່ທາງລາກ ນ້ຳໜັກລວມ ເກີນ 750 ກິໂລກຣາມຂຶ້ນໄປ ແລະ ລົດຂົນສົ່ງໂດຍສານ ແຕ່ສາມສິບທີກບ່ອນນັ່ງຂຶ້ນໄປ.

**ມາດຕາ 15 (ໃໝ່) ໃບຂັບຂີ່**

ໃບຂັບຂີ່ຍານພາຫະນະທີ່ ສປປ ລາວ ອອກໃຫ້ ມີ ໃບຂັບຂີ່ພາຍໃນ ແລະ ໃບຂັບຂີ່ສາກົນ.

ໃບຂັບຂີ່ພາຍໃນ ແມ່ນ ອອກໃຫ້ແກ່ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ທີ່ໄດ້ຜ່ານການສອບເສັງ ຢູ່ ສປປ ລາວ ເພື່ອນຳໃຊ້ ຢູ່ພາຍໃນປະເທດ ແລະ ຢູ່ບັນດາປະເທດ ທີ່ມີການຮັບຮູ້ໃບຂັບຂີ່ ຊຶ່ງກັນ ແລະ ກັນ, ມີອາຍຸການນຳໃຊ້ ຫ້າປີ ແລະ ສາມາດຕໍ່ໄດ້ຄັ້ງລະ ຫ້າ ປີ.

ໃບຂັບຂີ່ສາກົນ ແມ່ນ ອອກໃຫ້ພົນລະເມືອງລາວ, ຊາວຕ່າງດ້າວ, ຄົນບໍ່ມີສັນຊາດ, ຄົນຕ່າງປະເທດ ທີ່ມີໃບຂັບຂີ່ພາຍໃນມາແລ້ວ ເພື່ອນຳໃຊ້ຢູ່ຕ່າງປະເທດ.

ຂະໜາດ, ລັກສະນະ ແລະ ມາດຕະຖານຂອງໃບຂັບຂີ່ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 16 (ປັບປຸງ) ປະເພດໃບຂັບຂີ່ຕາມຊະນິດຍານພາຫະນະ**

**ໃບຂັບຂີ່ພາຍໃນ ຈັດຕາມຊະນິດຍານພາຫະນະ ດ້ວຍຕົວອັກສອນລາແຕງ ດັ່ງນີ້:**

- A : ລົດຈັກສອງລໍ້ ຄວາມແຮງບໍ່ເກີນ 125 cc;
- A1: ລົດຈັກສອງລໍ້ ຄວາມແຮງແຕ່ 125 cc ຂຶ້ນໄປ;
- A2: ລົດຈັກສາມລໍ້ສ່ວນຕົວ ແລະ ລົດສອງລໍ້, ສາມລໍ້ ໂດຍສານ;
- A3: ລົດໄຖນາທີ່ແກ່ລໍ້, ລົດຕໍ່ອກໆ;
- B: ລົດເບົາ ນ້ຳໜັກລວມ ຕ່ຳກວ່າ 3.500 ກິໂລກຣາມ, ບໍ່ເກີນ ເກົ້າ ບ່ອນນັ່ງລວມທັງຜູ້ຂັບຂີ່;
- C: ລົດຂົນສົ່ງສິນຄ້າ ນ້ຳໜັກລວມ ແຕ່ 3.500 ກິໂລກຣາມ ຫາ 7.500 ກິໂລກຣາມ;
- C1: ລົດຂົນສົ່ງສິນຄ້າ ນ້ຳໜັກລວມ ເກີນກວ່າ 7.500 ກິໂລກຣາມ ຫາ 15.000 ກິໂລກຣາມ;
- C2: ລົດຂົນສົ່ງສິນຄ້າ ນ້ຳໜັກລວມ ເກີນກວ່າ 15.000 ກິໂລກຣາມ;
- D: ລົດຂົນສົ່ງໂດຍສານ ປະເພດ 4 ລໍ້ ຂຶ້ນໄປ, ບໍ່ເກີນ ສິບຫ້າ ບ່ອນນັ່ງ;
- D1: ລົດຂົນສົ່ງໂດຍສານ ແຕ່ ສິບຫົກ ຫາ ສາມສິບຫ້າ ບ່ອນນັ່ງ;
- D2: ລົດຂົນສົ່ງໂດຍສານ ແຕ່ ສາມສິບຫົກ ບ່ອນນັ່ງຂຶ້ນໄປ;

- E: ລົດເບົາ (B), ລົດຂົນສົ່ງສິນຄ້າ (C) ແລະ ລົດຂົນສົ່ງໂດຍສານ (D) ທີ່ແກ່ຫາງລາກ ນໍ້າໜັກລວມ ບໍ່ເກີນ 750 ກິໂລກຣາມ;

- E1: ລົດຂົນສົ່ງສິນຄ້າ (C2) ແກ່ຫາງລາກ ນໍ້າໜັກລວມ ເກີນກວ່າ 750 ກິໂລກຣາມ.

**ມາດຕາ 17 (ປັບປຸງ) ໃບຂັບຂີ່ຕ່າງປະເທດ**

ໃບຂັບຂີ່ຕ່າງປະເທດ ແມ່ນ ໃບອະນຸຍາດໃຫ້ຂັບຂີ່ຍານພາຫະນະ ຊຶ່ງອອກຢູ່ຕ່າງປະເທດ.

ສປປ ລາວ ຮັບຮູ້ໃບຂັບຂີ່ຕ່າງປະເທດຂອງ ບຸກຄົນ ທີ່ມີໃບຂັບຂີ່ສາກົນ ຫຼື ມີໃບຂັບຂີ່ຂອງ ປະເທດທີ່ມີການຮັບຮູ້ ຊຶ່ງກັນ ແລະ ກັນ.

**ມາດຕາ 18 (ປັບປຸງ) ການຂັບຂີ່ ແລະ ການບັນທຸກ**

**ການຂັບຂີ່ ແລະ ການບັນທຸກ ຂອງລົດຂົນສົ່ງຄົນ ແລະ ຜູ້ໂດຍສານ ໃຫ້ປະຕິບັດດັ່ງນີ້:**

- ລົດຖີບ ໃຫ້ຊ້ອນໄດ້ ໜຶ່ງຄົນ;
- ລົດຈັກ ອະນຸຍາດໃຫ້ຜູ້ໃຫຍ່ຊ້ອນໄດ້ໜຶ່ງຄົນ ແລະ ເດັກນ້ອຍອາຍຸບໍ່ເກີນ ສິບເອັດປີ ອີກໜຶ່ງຄົນ; ຜູ້ຂັບຂີ່ ແລະ ຜູ້ຊ້ອນ ຕ້ອງໃສ່ໝວກກັນກະທົບ ທີ່ໄດ້ມາດຕະຖານ;
- ລົດຖີບສາມລໍ້, ລົດຈັກສາມລໍ້ຕິດຂ້າງ ໃຫ້ຂີ່ໄດ້ສາມຄົນລວມທັງຜູ້ຂັບຂີ່;
- ລົດສາມລໍ້ຊະນິດຈໍາໂບ້ ໃຫ້ຂີ່ໄດ້ ບໍ່ເກີນ ຫ້າຄົນ ຫຼື ບັນທຸກສິນຄ້າ, ເຄື່ອງຂອງບໍ່ເກີນ 300 ກິໂລກຣາມ; ລົດສາມລໍ້ຊະນິດຕຸກໆ, ສະກາຍແລັບ ອະນຸຍາດໃຫ້ຂີ່ໄດ້ ບໍ່ເກີນເກົ້າຄົນ ຫຼື ບັນທຸກສິນຄ້າ, ເຄື່ອງຂອງບໍ່ເກີນ 550 ກິໂລກຣາມ;
- ລົດເກງ, ລົດຈິບ, ລົດຕູ້, ລົດກະບະ ໃຫ້ບັນທຸກຕາມມາດຕະຖານ ຂອງໂຮງງານຜະລິດ.

ຜູ້ຂັບຂີ່ ລົດສີ່ລໍ້ຂຶ້ນໄປ ລວມທັງ ຜູ້ນັ່ງທາງໜ້າ ຕ້ອງໃສ່ສາຍຮັດນິລະໄພ, ເດັກນ້ອຍ ທີ່ບໍ່ສາມາດ ໃສ່ສາຍຮັດນິລະໄພປົກກະຕິໄດ້ ໃຫ້ນໍາໃຊ້ເບາະນັ່ງສະເພາະ.

**ມາດຕາ 19 (ໃໝ່) ຂໍ້ຈໍາກັດ ຄວາມໄວ ແລະ ໄລຍະຫ່າງລະຫວ່າງລົດ**

**ຄວາມໄວສູງສຸດທີ່ອະນຸຍາດໃຫ້ລົດແຕ່ລະປະເພດແລ່ນຕາມເສັ້ນທາງໃນ ສປປ ລາວ ໄດ້ກໍານົດໄວ້ ດັ່ງນີ້:**

- ບໍ່ໃຫ້ເກີນ ສີ່ສິບ ກິໂລແມັດ ຕໍ່ຊົ່ວໂມງ ສໍາລັບການສັນຈອນໜາແໜ້ນຕາມເສັ້ນທາງໃນຕົວເມືອງ, ເທດສະບານ, ເຂດຊຸມຊົນ;

- ບໍ່ໃຫ້ເກີນ ເກົ້າສິບ ກິໂລແມັດ ຕໍ່ຊົ່ວໂມງ ສໍາລັບການສັນຈອນ ຂອງລົດເບົາທຸກປະເພດ ແລະ ລົດຈັກ ແຕ່ 125 cc ຂຶ້ນໄປ ຕາມເສັ້ນທາງຫຼວງ ນອກເຂດຕົວເມືອງ;

- ບໍ່ໃຫ້ເກີນ ເຈັດສິບ ກິໂລແມັດ ຕໍ່ຊົ່ວໂມງ ສໍາລັບລົດບັນທຸກສິນຄ້າ, ລົດໂດຍສານ ແລະ ລົດຈັກ ບໍ່ເກີນ 125 cc ຕາມເສັ້ນທາງຫຼວງ ນອກເຂດຕົວເມືອງ.

ນອກຈາກນີ້ ຄວາມໄວສູງສຸດທີ່ອະນຸຍາດໃຫ້ແລ່ນໃນແຕ່ລະຕອນທາງ ແມ່ນໃຫ້ປະຕິບັດຕາມປ້າຍກໍານົດຄວາມໄວ.

ເມື່ອລົດສອງຄັນແລ່ນໃນຊ່ອງຈະລາຈອນດຽວກັນ, ລົດຄັນແລ່ນຕາມຫຼັງ ຕ້ອງຮັກສາໄລຍະຫ່າງທີ່ເໝາະສົມ ກັບສະພາບເສັ້ນທາງ, ດິນຟ້າອາກາດ, ຂະໜາດ ແລະ ນໍ້າໜັກບັນທຸກຂອງລົດເພື່ອຮັບປະກັນຄວາມປອດໄພ ໃນກໍລະນີ ລົດຄັນແລ່ນທາງໜ້າ ຢຸດກະທັນຫັນ.

ລົດທີ່ແລ່ນເປັນຂະບວນແຕ່ສອງຂະບວນຂຶ້ນໄປ ຕ້ອງຮັກສາໄລຍະຫ່າງ ລະຫວ່າງຂະບວນຢ່າງໜ້ອຍ 150 ແມັດ ແລະ ໄລຍະຫ່າງລະຫວ່າງລົດໃນຂະບວນຢ່າງໜ້ອຍ 25 ແມັດ.

ຄວາມໄວສູງສຸດທີ່ໄດ້ກໍານົດໄວ້ໃນມາດຕານີ້ ບໍ່ກວມເອົາຄວາມໄວຂອງລົດສັນຈອນພິເສດ ແລະ ລົດທີ່ປະຕິບັດວຽກງານ ໃນກໍລະນີເກີດເຫດສຸກເສີນ ເຊັ່ນ ອຸບປະຕິເຫດ, ຄົນເຈັບ, ໄຟໄໝ້, ນໍ້າຖ້ວມ ແລະ ເຫດສຸກເສີນອື່ນ.

### ມາດຕາ 20 (ໃໝ່) ທາດເຫຼົ້າໃນຮ່າງກາຍຂອງຜູ້ຂັບຂີ່

**ຄວາມເຂັ້ມຂຸ້ນຂອງທາດເຫຼົ້າໃນຮ່າງກາຍ ຂອງຜູ້ຂັບຂີ່ຍານພາຫະນະທຸກຊະນິດ ທີ່ອະນຸຍາດສູງສຸດບໍ່ໃຫ້ເກີນ ດັ່ງນີ້:**

1. **ສໍາລັບຜູ້ຂັບຂີ່ລົດສ່ວນຕົວສີ່ລໍ້ທຸກຊະນິດ**
   - ໃນລົມຫາຍໃຈ: 0,24 ມີລີກຣາມ ຕໍ່ ລິດ (BrAC);
   - ໃນເລືອດ: 50 ມີລີກຣາມ ຕໍ່ 100 ມີລີລິດ (BAC);
   - ໃນປັດສະວະ: 66,5 ມີລີກຣາມ ຕໍ່ 100 ມີລີລິດ (Urine).
2. **ສໍາລັບຜູ້ຂັບຂີ່ລົດຂົນສົ່ງຮັບຈ້າງທຸກຊະນິດ**
   - ໃນລົມຫາຍໃຈ: 0 ມີລີກຣາມ ຕໍ່ ລິດ (BrAC);
   - ໃນເລືອດ: 0 ມີລີກຣາມ ຕໍ່ 100 ມີລີລິດ (BAC);
   - ໃນປັດສະວະ: 0 ມີລີກຣາມ ຕໍ່ 100 ມີລີລິດ (Urine).
3. **ສໍາລັບຜູ້ຂັບຂີ່ລົດຈັກສອງລໍ້ ແລະ ສາມລໍ້**
   - ໃນລົມຫາຍໃຈ: 0,14 ມີລີກຣາມ ຕໍ່ ລິດ (BrAC);
   - ໃນເລືອດ: 30 ມີລີກຣາມ ຕໍ່ 100 ມີລີລິດ (BAC);
   - ໃນປັດສະວະ: 39,9 ມີລີກຣາມ ຕໍ່ 100 ມີລີລິດ (Urine).

ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ມີສິດກວດກາຄວາມເຂັ້ມຂຸ້ນ ຂອງທາດເຫຼົ້າໃນລົມຫາຍໃຈຂອງຜູ້ຂັບຂີ່.

ໃນກໍລະນີ ເກີດອຸບປະຕິເຫດ ທີ່ເຮັດໃຫ້ຄົນບາດເຈັບ, ເສຍຊີວິດ, ຊັບສິນເສຍຫາຍນັ້ນ ແພດ ມີໜ້າທີ່ກວດຫາຄວາມເຂັ້ມຂຸ້ນຂອງທາດເຫຼົ້າໃນເລືອດ ແລະ ປັດສະວະ ຂອງຜູ້ຂັບຂີ່ ແລະ ຂອງຄູ່ກໍລະນີທີ່ເກີດອຸບປະຕິເຫດ ເພື່ອໃຊ້ເປັນຂໍ້ມູນໃຫ້ແກ່ການດໍາເນີນຄະດີ.

## **ໝວດທີ 3**
## **ລະບົບສັນຍານຈະລາຈອນ**

ມາດຕາ 21 (ໃໝ່) **ລະບົບສັນຍານຈະລາຈອນ**

**ລະບົບສັນຍານຈະລາຈອນ ປະກອບດ້ວຍ:**

- ປ້າຍຈະລາຈອນ;
- ສັນຍານຈະລາຈອນ;
- ເຄື່ອງໝາຍຈະລາຈອນ.

ລະບົບສັນຍານຈະລາຈອນ ຕ້ອງເປັນລະບົບດຽວ ໃນຂອບເຂດທົ່ວປະເທດ. ຜູ້ຂັບຂີ່ ຕ້ອງປະຕິບັດຕາມລະບົບສັນຍານຈະລາຈອນຢ່າງເຂັ້ມງວດ.

ມາດຕາ 22 (ໃໝ່) **ປ້າຍຈະລາຈອນ**

**ປ້າຍຈະລາຈອນ ແມ່ນ ເຄື່ອງໝາຍຊີ້ບອກໃຫ້ປະຕິບັດກົດຈະລາຈອນ ຕາມເສັ້ນທາງ ຊຶ່ງປະກອບດ້ວຍໝວດປ້າຍຕ່າງໆ ດັ່ງນີ້:**

- ປ້າຍເຕືອນອັນຕະລາຍ;
- ປ້າຍຫ້າມ;
- ປ້າຍກໍານົດ;
- ປ້າຍບອກສິດ;
- ປ້າຍແນະນໍາເສັ້ນທາງ;
- ປ້າຍບອກສະຖານທີ່ບໍລິການ;
- ປ້າຍເພີ່ມ.

ຄວາມໝາຍ ແລະ ຮູບແບບຂອງແຕ່ລະໝວດປ້າຍ ໄດ້ກໍານົດໄວ້ໃນກົດຈະລາຈອນ.

ມາດຕາ 23 (ໃໝ່) **ສັນຍານຈະລາຈອນ**

ສັນຍານຈະລາຈອນ ແມ່ນ ການຊີ້ບອກການສັນຈອນ ຕາມເສັ້ນທາງ ດ້ວຍແສງໄຟ, ສີ, ສຽງ, ຄົນ ແລະ ຫຸ່ນຈໍາລອງ.

**ສັນຍານດ້ວຍແສງໄຟ ປະກອບດ້ວຍ ສາມ ສີ ດັ່ງນີ້:**

- ໄຟສີແດງ ແມ່ນ ຫ້າມສັນຈອນ;
- ໄຟສີເຫລືອງ ແມ່ນ ໃຫ້ລະວັງ, ກຽມຢຸດ;

- ໄຟສີຂຽວ ແມ່ນ ໃຫ້ສັນຈອນໄດ້.

**ມາດຕາ 24 (ໃໝ່) ເຄື່ອງໝາຍຈະລາຈອນ**

ເຄື່ອງໝາຍຈະລາຈອນ ປະກອບດ້ວຍ ເຄື່ອງໝາຍທີ່ຕິດຕັ້ງ, ຂີດ, ຂຽນ, ແຕ້ມໄວ້ຕາມໜ້າທາງ, ບ່າທາງ, ແຄມທາງ, ເທິງທາງ, ຫຼັກໝາຍ, ຮາວປ້ອງກັນຄວາມປອດໄພ, ລູກສອນຊີ້ບອກທິດທາງ, ເສັ້ນແບ່ງທິດທາງການສັນຈອນ, ເສັ້ນໃຈກາງທາງ, ເສັ້ນແບ່ງຊ່ອງຈະລາຈອນ, ເສັ້ນທາງມ້າລາຍ ແລະ ອື່ນໆ ເພື່ອເຕືອນ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈະລາຈອນ.

**ມາດຕາ 25 (ໃໝ່) ການຕິດຕັ້ງ ລະບົບສັນຍານຈະລາຈອນ**

ປ້າຍ, ເຄື່ອງໝາຍຈະລາຈອນ, ເຄື່ອງສັນຍານຈະລາຈອນ ຕ້ອງມີຄຸນນະພາບ ຕາມມາດຕະຖານເຕັກນິກ ແລະ ຕ້ອງໄດ້ຮັບການຕິດຕັ້ງຢ່າງຖືກຕ້ອງຕາມລະບຽບການ ຂອງກະຊວງໂຍທາທິການ ແລະ ຂົນສົ່ງ, ສ່ວນການສັນຍານຈະລາຈອນດ້ວຍຄົນ ຕ້ອງປະຕິບັດຕາມລະບຽບການຂອງກະຊວງປ້ອງກັນຄວາມສະຫງົບ.

ເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ ເປັນຜູ້ມີສິດຕິດຕັ້ງ, ຄຸ້ມຄອງລະບົບສັນຍານຈະລາຈອນ ຖາວອນ.

ສຳລັບ ຕຳຫຼວດຈະລາຈອນ ຫຼື ຕຳຫຼວດທາງຫຼວງ ມີສິດຕິດຕັ້ງ ແລະ ຄຸ້ມຄອງລະບົບສັນຍານຈະລາຈອນ ຊົ່ວຄາວ.

## ໝວດທີ 4
## ການຄວບຄຸມການຈະລາຈອນທາງບົກ

**ມາດຕາ 26 (ປັບປຸງ) ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ**

**ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ປະກອບດ້ວຍ:**

1. ຕຳຫຼວດຈະລາຈອນ ຊຶ່ງມີໜ້າທີ່ອຳນວຍຄວາມສະດວກ, ຄວບຄຸມ ແລະ ກວດກາ ການຈະລາຈອນໃນຕົວເມືອງ;
2. ຕຳຫຼວດທາງຫຼວງ ຊຶ່ງມີໜ້າທີ່ອຳນວຍຄວາມສະດວກ, ຄວບຄຸມ ແລະ ກວດກາການຈະລາຈອນນອກຕົວເມືອງ;
3. ເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ ຊຶ່ງມີໜ້າທີ່ກວດກາເຕັກນິກການຂົນສົ່ງ, ມາດຕະຖານເຕັກນິກຂອງຍານພາຫະນະຂົນສົ່ງທຸກປະເພດ, ກິດຈະການຂົນສົ່ງຕາມເສັ້ນທາງຫຼວງ ແລະ ພື້ນຖານໂຄງລ່າງດ້ານການຂົນສົ່ງ;
4. ຜູ້ຮັບມອບໝາຍຈາກທາງການ.

ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ຕ້ອງມີເຄື່ອງແບບ ແລະ ເຄື່ອງໝາຍ. ລັດປະກອບຍານພາຫະນະ ແລະ ອຸປະກອນວິຊາສະເພາະ ທີ່ຈຳເປັນ ໃຫ້ແກ່ເຈົ້າໜ້າທີ່ດັ່ງກ່າວ.

**ມາດຕາ 27 (ປັບປຸງ) ການປະຕິບັດໜ້າທີ່ ຂອງ ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ**

ໃນເວລາປະຕິບັດໜ້າທີ່ ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ຕ້ອງນຸ່ງເຄື່ອງແບບ, ຕິດເຄື່ອງໝາຍ, ປ້າຍຊື່ ແລະ ປະຕິບັດຕາມລະບຽບການຂອງກະຊວງປ້ອງກັນຄວາມສະຫງົບ, ກະຊວງໂຍທາທິການ ແລະ ຂົນສົ່ງ ຢ່າງເຂັ້ມງວດ. ໃນການປະຕິບັດໜ້າທີ່ກວດກາແຕ່ລະຄັ້ງ ຕ້ອງມີເຈົ້າໜ້າທີ່ ຢ່າງໜ້ອຍ ສາມ ຄົນ.

ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ຕ້ອງແກ້ໄຂຢ່າງທັນການ ໃນກໍລະນີ ມີອຸບປະຕິເຫດເກີດຂຶ້ນ, ມີສິ່ງກີດຂວາງ, ມີການສັນຈອນສັບສົນ ຫຼື ມີການສັນຈອນພິເສດ.

ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ມີສິດເໜືອກວ່າລະບົບສັນຍານຈະລາຈອນ.

**ມາດຕາ 28 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຕຳຫຼວດຈະລາຈອນ ແລະ ຕຳຫຼວດທາງຫຼວງ**

ຕຳຫຼວດຈະລາຈອນ ແລະ ຕຳຫຼວດທາງຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ອຳນວຍຄວາມສະດວກ, ຄວບຄຸມການຈະລາຈອນ ແລະ ກວດກາການເຄົາລົບລະບຽບກົດໝາຍ ກ່ຽວກັບການຈະລາຈອນທາງບົກ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ;
2. ກວດກາສະພາບຂອງຜູ້ຂັບຂີ່, ເອກະສານຂອງຜູ້ຂັບຂີ່ ແລະ ເອກະສານຂອງຍານພາຫະນະ, ກວດກາທາດເຫຼົ້າໃນລົມຫາຍໃຈຂອງຜູ້ຂັບຂີ່ ແລະ ຄວາມໄວ ຂອງຍານພາຫະນະທຸກຊະນິດ;
3. ສຶກສາອົບຮົມ, ປັບໃໝ ຫຼື ດຳເນີນຄະດີ ຕໍ່ຜູ້ລະເມີດຕາມລະບຽບກົດໝາຍ;
4. ກັກຕົວຜູ້ລະເມີດ ພ້ອມທັງຍານພາຫະນະ ທີ່ກໍ່ໃຫ້ເກີດອຸບປະຕິເຫດ ແລ້ວພາໃຫ້ຄົນເສຍຊີວິດ, ບາດເຈັບສາຫັດ ຫຼື ເກີດອຸບປະຕິເຫດແລ້ວ ເອົາຕົວຫຼົບໜີ;
5. ກັກຍານພາຫະນະ ທີ່ບໍ່ມີການປະກັນໄພ ໃນກໍລະນີເກີດອຸບປະຕິເຫດ ທີ່ພາໃຫ້ມີຄົນບາດເຈັບ ແລະ ຄູ່ກໍລະນີ ບໍ່ສາມາດຕົກລົງກັນໄດ້ກ່ຽວກັບຄວາມຮັບຜິດຊອບຕໍ່ຄວາມເສຍຫາຍ;
6. ຍົກ, ລັອກລໍ້ ຍານພາຫະນະ ທີ່ຈອດບໍ່ຖືກຕ້ອງ ແລະ ກີດຂວາງການຈະລາຈອນ;
7. ກວດ ຄວັນດຳ, ຄວັນຂາວ, ສຽງດັງ ຂອງຍານພາຫະນະ;
8. ປົກປັກຮັກສາຍານພາຫະນະທີ່ຖືກກັກ ພ້ອມດ້ວຍອຸບປະກອນໃຫ້ດີ;
9. ເກັບກຳຂໍ້ມູນ, ຕິດຕາມຜູ້ລະເມີດກົດຈະລາຈອນ ຕາມເສັ້ນທາງ ແລະ ແຈ້ງເຫດການໃຫ້ເຈົ້າໜ້າທີ່ໜ່ວຍປະຕິບັດການ;
10. ລົງຊັນນະສູດ, ບັນທຶກເຫດການ, ຖ່າຍຮູບ ແລະ ແຕ້ມແຜນວາດດຽວໃຫ້ລະອຽດ, ຊັດເຈນ, ຄົບຖ້ວນກ່ຽວກັບສະຖານທີ່ເກີດເຫດ ລວມທັງສືບສວນ-ສອບສວນ ຜູ້ກ່ຽວຂ້ອງ ແລະ ພະຍານທີ່ຢູ່ໃນເຫດການ ຢ່າງທັນການ;
11. ປະຕິບັດສິດ ແລະ ໜ້າທີ່ອື່ນຕາມລະບຽບກົດໝາຍ.

ສຳລັບ ຕຳຫຼວດທາງຫຼວງ ຍັງມີສິດ ແລະ ໜ້າທີ່ໃຫ້ຄວາມຮ່ວມມື, ປະສານສົມທົບກັບເຈົ້າໜ້າທີ່ໂຍທາທິການ ແລະຂົນສົ່ງ ໃນການກວດກາການຂົນສົ່ງທາງບົກຕາມເສັ້ນທາງຫຼວງອີກດ້ວຍ.

**ມາດຕາ 29 (ປັບປຸງ) ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ**

ເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ອຳນວຍຄວາມສະດວກ, ຄວບຄຸມ ແລະ ກວດກາການດຳເນີນທຸລະກິດຂົນສົ່ງທາງບົກ, ກວດກາສະພາບເຕັກນິກລົດ, ກວດກາການບັນທຸກ ຂອງລົດຂົນສົ່ງທຸກປະເພດ, ຜູ້ຂັບຂີ່ ແລະ ພະນັກງານປະຈຳ ຂອງຍານພາຫະນະຂົນສົ່ງຮັບຈ້າງ ແລະ ຂົນສົ່ງສະເພາະ;

2. ຮ່ວມມື, ປະສານສົມທົບ ກັບຕຳຫຼວດຈະລາຈອນ, ຕຳຫຼວດທາງຫຼວງ ໃນການອຳນວຍຄວາມສະດວກ, ຄວບຄຸມ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍຂອງການຈະລາຈອນຕາມເສັ້ນທາງ;

3. ກວດກາ ສິ່ງອຳນວຍຄວາມສະດວກ, ສິ່ງກີດຂວາງການຈະລາຈອນ ແລະ ສະພາບຂອງເສັ້ນທາງ ຢ່າງເປັນປົກກະຕິ ເພື່ອປັບປຸງແກ້ໄຂ.

**ມາດຕາ 30 (ໃໝ່) ຜູ້ຮັບມອບໝາຍຈາກທາງການ**

ຜູ້ຮັບມອບໝາຍຈາກທາງການ ແມ່ນ ບຸກຄົນ ຫຼື ອາສາສະໝັກ ທີ່ການຈັດຕັ້ງມອບໝາຍໃຫ້ຊ່ວຍຄວບຄຸມຄວາມເປັນລະບຽບຮຽບຮ້ອຍ ແລະ ອຳນວຍຄວາມສະດວກໃຫ້ແກ່ການຈະລາຈອນໃນເວລາສະເພາະໃດໜຶ່ງ.

ສິດ ແລະ ໜ້າທີ່ ຂອງຜູ້ຮັບມອບໝາຍຈາກທາງການ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 31 (ປັບປຸງ) ການກວດກາ ແລະ ການແກ້ໄຂອຸບປະຕິເຫດທາງຖະໜົນ**

ເມື່ອໄດ້ຮັບແຈ້ງຄວາມວ່າມີອຸບປະຕິເຫດເກີດຂຶ້ນ ຕຳຫຼວດຈະລາຈອນ ຫຼື ຕຳຫຼວດທາງຫຼວງ ຕ້ອງຮີບຮ້ອນລົງຊັນນະສູດ, ບັນທຶກເຫດການ, ຖ່າຍຮູບ ແລະ ແຕ້ມແຜນວາດດຽວ ໃຫ້ລະອຽດ, ຊັດເຈນ, ຄົບຖ້ວນກ່ຽວກັບສະຖານທີ່ເກີດເຫດ ລວມທັງສືບສວນ-ສອບສວນ ຜູ້ກ່ຽວຂ້ອງ ແລະ ພະຍານ ທີ່ຢູ່ໃນເຫດການຢ່າງທັນການ ເພື່ອດຳເນີນການແກ້ໄຂ ຕາມລະບຽບກົດໝາຍ ພ້ອມທັງຍົກຍ້າຍ ຍານພະຫະນະ ແລະ ສິ່ງກີດຂວາງອອກຈາກພື້ນທີ່ບ່ອນເກີດອຸບປະຕິເຫດຢ່າງຮີບດ່ວນ.

## ໝວດທີ 5

## ການກໍ່ສ້າງ ແລະ ສ້ອມແປງເສັ້ນທາງ

**ມາດຕາ 32 (ໃໝ່) ໂຄງການກໍ່ສ້າງເສັ້ນທາງ**

ທຸກໂຄງການກໍ່ສ້າງເສັ້ນທາງ ຕ້ອງໄດ້ຜ່ານການກວດສອບຄວາມປອດໄພ ໃນການຈະລາຈອນ ຕາມຂັ້ນຕອນ ດັ່ງນີ້:

- ການສຶກສາຄວາມເປັນໄປໄດ້ຂອງໂຄງການ;

- ການອອກແບບເບື້ອງຕົ້ນ;
- ການອອກແບບກໍ່ສ້າງ;
- ໄລຍະການກໍ່ສ້າງ;
- ໄລຍະກ່ອນເປີດການນຳໃຊ້;
- ໄລຍະການນຳໃຊ້.

ແຕ່ລະຂັ້ນຕອນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

ມາດຕາ 33 (ໃໝ່) **ການກໍ່ສ້າງ ແລະ ສ້ອມແປງເສັ້ນທາງ**

**ໃນການກໍ່ສ້າງ ຫຼື ສ້ອມແປງເສັ້ນທາງ ຕ້ອງຮັບປະກັນການຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ ດັ່ງນີ້:**

- ຮັບປະກັນໃຫ້ການສັນຈອນມີຄວາມສະດວກ, ໂລ່ງລ່ຽນ ແລະ ເປັນລະບຽບຮຽບຮ້ອຍ;
- ຮັບປະກັນຄວາມປອດໄພ ດ້ວຍການຕິດຕັ້ງປ້າຍສັນຍານ, ເຄື່ອງໝາຍເຕືອນສະທ້ອນແສງທີ່ສາມາດແນມເຫັນໄດ້ຢ່າງສະດວກ ແລະ ຈະແຈ້ງໃນໄລຍະໄກ, ຕິດຕັ້ງໄຟແສງສະຫວ່າງ ແລະ ໄຟສັນຍານເຕືອນອັນຕະລາຍ ເມື່ອຍາມຄໍ່າ, ມືດ;
- ອຳນວຍຄວາມສະດວກໃຫ້ແກ່ຄົນພິການ, ຄົນເສັຍອົງຄະ ແລະ ຜູ້ບໍ່ສາມາດຊ່ວຍຕົນເອງໄດ້;
- ຮັບປະກັນໃຫ້ການກໍ່ສ້າງ ຫຼື ສ້ອມແປງ ສຳເລັດຕາມແຜນການ, ວ່ອງໄວ, ທັນເວລາ ແລະ ມີຄຸນນະພາບສູງ.

## ພາກທີ III
## ມາດຕະຖານເຕັກນິກ ແລະ ການຄຸ້ມຄອງຍານພາຫະນະ
### ໝວດທີ 1
### ມາດຕະຖານເຕັກນິກຂອງພາຫະນະ

ມາດຕາ 34 (ປັບປຸງ) **ຊະນິດພາຫະນະ**

ພາຫະນະທີ່ນຳໃຊ້ ຢູ່ ສປປ ລາວ ມີ ສອງຊະນິດ ຄື ຊະນິດທີ່ແລ່ນດ້ວຍເຄື່ອງຈັກ ແລະ ຊະນິດທີ່ບໍ່ແລ່ນດ້ວຍເຄື່ອງຈັກ.

ພາຫະນະທີ່ແລ່ນດ້ວຍເຄື່ອງຈັກ ປະກອບດ້ວຍ ລົດສອງລໍ້, ລົດສາມລໍ້, ລົດສີ່ລໍ້ ຂຶ້ນໄປລວມທັງພາຫະນະກົນຈັກໜັກທຸກປະເພດທີ່ຂັບເຄື່ອນດ້ວຍເຄື່ອງຈັກ.

ພາຫະນະທີ່ບໍ່ແລ່ນດ້ວຍເຄື່ອງຈັກ ປະກອບດ້ວຍ ລົດຖີບສອງລໍ້, ລົດຖີບສາມລໍ້, ກວຽນ, ລໍ້ ແລະ ອື່ນໆ ທີ່ລາກແກ່, ຊຸກ ຫຼື ຍູ້ ດ້ວຍຄົນ ຫຼື ສັດ.

**ມາດຕາ 35 (ປັບປຸງ) ມາດຕະຖານເຕັກນິກ ຂອງຍານພາຫະນະ**

ຍານພາຫະນະທຸກຊະນິດ ທີ່ນໍາເຂົ້າ, ຜະລິດ, ປະກອບ ເພື່ອຂຶ້ນທະບຽນ ແລະ ນໍາໃຊ້ຢູ່ ສປປ ລາວ ຕ້ອງມີໂຄງປະກອບສ້າງ ທີ່ຖືກຕ້ອງຕາມມາດຕະຖານຂອງໂຮງງານຜະລິດທີ່ໄດ້ມາດຕະຖານສາກົນ, ມີຄຸນນະພາບທີ່ຖືກຕ້ອງຕາມມາດຕະຖານ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງກໍານົດ, ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

ສໍາລັບລົດຂົນສົ່ງທຸກປະເພດ ແຕ່ ສີ່ລໍ້ຂຶ້ນໄປ ຕ້ອງມີພວງມະໄລຊ້າຍ ຍົກເວັ້ນຍານພາຫະນະຂົນສົ່ງທີ່ດໍາເນີນທຸລະກິດການຂົນສົ່ງຂ້າມແດນທີ່ນໍາໃຊ້ການຈະລາຈອນກໍ້າຊ້າຍ ຊຶ່ງໄດ້ກໍານົດໄວ້ໃນວັກສຸດທ້າຍຂອງມາດຕາ 15 ຂອງກົດໝາຍວ່າດ້ວຍ ການຂົນສົ່ງທາງບົກ.

**ມາດຕາ 36 (ປັບປຸງ) ການກວດກາເຕັກນິກຂອງຍານພາຫະນະ**

ຍານພາຫະນະທຸກຊະນິດທີ່ສັນຈອນຕາມເສັ້ນທາງ ຕ້ອງໄດ້ຜ່ານການກວດກາເຕັກນິກຕາມກໍານົດເວລາຢ່າງເຂັ້ມງວດ ແລະ ໄດ້ຮັບໃບຢັ້ງຢືນການກວດກາ ຈາກສູນກວດກາເຕັກນິກ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ຮັບຮອງ.

**ມາດຕາ 37 (ປັບປຸງ) ການສ້ອມແປງຍານພາຫະນະ**

ການສ້ອມແປງຍານພາຫະນະ ຕ້ອງບໍ່ກີດຂວາງການສັນຈອນ, ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ, ຮັບປະກັນຄວາມປອດໄພ ແລະ ຄວາມຖືກຕ້ອງຕາມມາດຕະຖານເຕັກນິກ ທີ່ກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ.

ການສ້າງຕັ້ງຮ້ານສ້ອມແປງ ແລະ ອູ່ສ້ອມແປງ ໄດ້ກໍານົດໄວ້ໃນລະບຽບການສະເພາະ.

## ໝວດທີ 2
## ການຄຸ້ມຄອງຍານພາຫະນະ

**ມາດຕາ 38 (ໃໝ່) ລະບຽບການທົ່ວໄປ**

ຜູ້ຂັບຂີ່ຍານພາຫະນະທຸກຊະນິດທີ່ສັນຈອນຕາມເສັ້ນທາງ ຕ້ອງປະຕິບັດຕາມກົດຈະລາຈອນ ຢ່າງເຂັ້ມງວດ, ຕ້ອງຕິດປ້າຍທະບຽນ, ມີເອກະສານຄົບຖ້ວນ ຕິດຕົວໄປນໍາ ແລະ ຕ້ອງມີການປະກັນໄພ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້. ສໍາລັບລົດໄຖ, ລົດຕໍ່ອກຈງນັ້ນ ຕ້ອງມີຫ້າມລໍ້, ໄຟໜ້າ, ໄຟທ້າຍ ແລະ ຕິດແຜ່ນສະທ້ອນແສງໃສ່ທາງດ້ານຂ້າງ ແລະ ດ້ານຫຼັງ.

ຜູ້ຂັບຂີ່ພາຫະນະທຸກຊະນິດ ທີ່ບໍ່ແລ່ນດ້ວຍເຄື່ອງຈັກ ທີ່ສັນຈອນຕາມເສັ້ນທາງ ຕ້ອງປະຕິບັດຕາມກົດຈະລາຈອນຢ່າງເຂັ້ມງວດເຊັ່ນດຽວກັນ. ສໍາລັບລົດຖີບສອງລໍ້, ສາມລໍ້ ຕ້ອງມີຫ້າມລໍ້, ໄຟໜ້າ, ໄຟທ້າຍ ແລະ ຕິດແຜ່ນສະທ້ອນແສງໃສ່ທາງໜ້າ, ທາງຫຼັງ ແລະ ທາງຂ້າງ.

**ມາດຕາ 39 (ປັບປຸງ) ການຂຶ້ນທະບຽນຍານພາຫະນະຂອງພົນລະເຮືອນ**

ຍານພາຫະນະຂອງພົນລະເຮືອນທຸກຊະນິດ ລວມທັງເຄື່ອງຫາງລາກ, ຫາງລາກ ແລະ ຍານພາຫະນະກົນຈັກໜັກ ເປັນຕົ້ນ ລົດດຸດ, ລົດຈົກ, ລົດກວາດ, ລົດໂລ, ລົດຍົກ ຕ້ອງຂຶ້ນທະບຽນ ແລະ ຕິດປ້າຍ ໃຫ້ຖືກຕ້ອງຕາມລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

ຍານພາຫະນະທີ່ຂາຍອອກຈາກຮ້ານ ຕ້ອງຕິດປ້າຍຕາມລະບຽບການ ເພື່ອຄວາມສະດວກໃນການກວດກາຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ ແລະ ຜູ້ຂາຍ ຕ້ອງຮັບຜິດຊອບຂຶ້ນທະບຽນໃຫ້ແກ່ລູກຄ້າ.

**ມາດຕາ 40 (ປັບປຸງ) ການຂຶ້ນທະບຽນຍານພາຫະນະຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ**

ຍານພາຫະນະ ທີ່ນຳໃຊ້ເຂົ້າໃນວຽກງານວິຊາສະເພາະ ແລະ ວຽກງານບໍລິຫານຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ຂຶ້ນທະບຽນ ແລະ ຕິດປ້າຍທະບຽນນຳກະຊວງປ້ອງກັນປະເທດ ຫຼື ກະຊວງປ້ອງກັນຄວາມສະຫງົບ.

ຍານພາຫະນະ ຂອງບຸກຄົນທີ່ສັງກັດຢູ່ ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕ້ອງຂຶ້ນທະບຽນ ແລະ ຕິດປ້າຍທະບຽນຕາມລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 41 (ປັບປຸງ) ການເຄື່ອນຍ້າຍຍານພາຫະນະກົນຈັກໜັກ**

ການເຄື່ອນຍ້າຍຍານພາຫະນະກົນຈັກໜັກຕາມເສັ້ນທາງຫຼວງ ຕ້ອງນຳໃຊ້ຍານພາຫະນະບັນທຸກ ທີ່ຖືກຕ້ອງຕາມມາດຕະຖານເຕັກນິກ; ຖ້າຫາກມີສ່ວນທີ່ລື່ນອອກຈາກລົດລາກແກ່ ໃຫ້ຕິດເຄື່ອງໝາຍ, ສັນຍາລັກເຕືອນອັນຕະລາຍ ຕາມລະບຽບການ ແລະ ຕ້ອງໄດ້ຮັບອະນຸຍາດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 39 ຂອງກົດໝາຍວ່າດ້ວຍການຂົນສົ່ງທາງບົກ.

**ມາດຕາ 42 (ໃໝ່) ການປະກັນໄພຍານພາຫະນະ**

ຍານພາຫະນະທຸກຊະນິດ ຕ້ອງມີການປະກັນໄພ ຕາມລະບຽບກົດໝາຍ ກ່ຽວກັບການປະກັນໄພ.

## ພາກທີ IV
## ທຸລະກິດ ກ່ຽວກັບ ການຈະລາຈອນທາງບົກ

**ມາດຕາ 43 (ໃໝ່) ປະເພດທຸລະກິດ ກ່ຽວກັບ ການຈະລາຈອນທາງບົກ**

**ທຸລະກິດກ່ຽວກັບ ການຈະລາຈອນທາງບົກ ມີ ປະເພດຕ່າງໆ ດັ່ງນີ້:**

1. ກວດກາເຕັກນິກຍານພາຫະນະ;
2. ສອນຂັບລົດ, ຝຶກແອບການຂັບຂີ່ລົດ;
3. ຜະລິດ, ຕິດຕັ້ງ, ສ້ອມແປງປ້າຍ, ໄຟສັນຍານ, ເຄື່ອງໝາຍຈະລາຈອນ;

4. ບໍລິການສ້ອມແປງລົດ;

5. ບໍລິການບ່ອນຈອດລົດ;

6. ບໍລິການ ລາກລົດ.

ມາດຕາ 44 (ໃໝ່) **ການສ້າງຕັ້ງ ວິສາຫະກິດ ກ່ຽວກັບ ການຈະລາຈອນທາງບົກ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງຕັ້ງວິສາຫະກິດກ່ຽວກັບການຈະລາຈອນທາງບົກ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ຕ້ອງມີເງື່ອນໄຂ ຕົ້ນຕໍ ດັ່ງນີ້:

- ມີບົດວິພາກເສດຖະກິດ-ເຕັກນິກ;
- ມີນັກວິຊາການ ທີ່ມີປະສົບການໃນການດຳເນີນທຸລະກິດ;
- ມີນັກວິຊາການທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການທາງດ້ານວິຊາສະເພາະເຕັກນິກ ກ່ຽວກັບການຈະລາຈອນທາງບົກ ໃນຈຳນວນທີ່ເໝາະສົມກັບຂະໜາດ ແລະ ປະເພດຂອງກິດຈະການ;
- ມີທຶນ, ຍານພາຫະນະ, ກົນຈັກ, ອຸປະກອນພຽງພໍ ແລະ ເໝາະສົມກັບຂະໜາດ ແລະ ປະເພດຂອງກິດຈະການ;
- ໃບຢັ້ງຢືນ ທີ່ຕັ້ງສຳນັກງານ;
- ໃບຢັ້ງຢືນ ຖານະການເງິນຈາກທະນາຄານ;
- ມີຈັນຍາບັນວິຊາຊີບ ກ່ຽວກັບການຈະລາຈອນທາງບົກ.

ຂະແໜງການໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກວດຜ່ານເງື່ອນໄຂດັ່ງກ່າວ ແລະ ມີຄຳເຫັນກ່ອນການຂຶ້ນທະບຽນວິສາຫະກິດ.

## ພາກທີ V
## ສະມາຄົມ ແລະ ມູນນິທິ ກ່ຽວກັບການຈະລາຈອນທາງບົກ
### ໝວດທີ 1
### ສະມາຄົມຜູ້ສະໜັບສະໜູນຄວາມປອດໄພທາງຖະໜົນ

ມາດຕາ 45 (ໃໝ່) **ທີ່ຕັ້ງ ຂອງສະມາຄົມຜູ້ສະໜັບສະໜູນຄວາມປອດໄພທາງຖະໜົນ**

ສະມາຄົມຜູ້ສະໜັບສະໜູນຄວາມປອດໄພທາງຖະໜົນ ແມ່ນ ອົງການຈັດຕັ້ງສັງຄົມໜຶ່ງທີ່ຂຶ້ນກັບຂະແໜງການໂຍທາທິການ ແລະ ຂົນສົ່ງ, ສ້າງຕັ້ງຂຶ້ນຕາມລະບຽບກົດໝາຍ, ເປັນບ່ອນເຕົ້າໂຮມ ຜູ້ດຳເນີນທຸລະກິດ ກ່ຽວກັບການຈະລາຈອນທາງບົກ ແລະ ທຸກພາກສ່ວນຂອງສັງຄົມເພື່ອປະກອບສ່ວນເຂົ້າໃນການພັດທະນາວຽກງານຈະລາຈອນທາງບົກ ໃຫ້ມີປະສິດທິຜົນ ແລະ ມີຄວາມເປັນລະບຽບຮຽບຮ້ອຍ

**ມາດຕາ 46 (ໃໝ່) ພາລະບົດບາດຂອງສະມາຄົມ**

ສະມາຄົມຜູ້ສະໜັບສະໜູນຄວາມປອດໄພທາງຖະໜົນ ມີພາລະບົດບາດເຕົ້າໂຮມຄວາມສາມັກຄີ, ສະຕິປັນຍາ ຂອງນັກວິຊາການ, ຜູ້ດຳເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ ແລະ ທຸກພາກສ່ວນຂອງສັງຄົມ, ເຄື່ອນໄຫວ ຢູ່ພາຍໃຕ້ລັດຖະທຳມະນູນ, ກົດໝາຍ, ກົດລະບຽບ ແລະ ຈັນຍາບັນຂອງຕົນ ເພື່ອປົກປ້ອງ, ສົ່ງເສີມ ແລະ ພັດທະນາວິຊາຊີບຂອງຕົນ ປະກອບສ່ວນເຂົ້າໃນການສ້າງຄຸນປະໂຫຍດ ໃຫ້ແກ່ສັງຄົມ ແລະ ການສ້າງສາພັດທະນາປະເທດຊາດ.

**ມາດຕາ 47 (ໃໝ່) ສິດ ແລະ ໜ້າທີ່ຂອງສະມາຄົມ**

**ສະມາຄົມ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ສ້າງກົດລະບຽບ, ແຜນການເຄື່ອນໄຫວວຽກງານຂອງຕົນ, ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ປະກອບສ່ວນເຂົ້າໃນການພັດທະນາການຈະລາຈອນທາງບົກ;
2. ຊ່ວຍເຫລືອ, ສ້າງ, ສົ່ງເສີມສະມາຊິກຂອງຕົນ ແລະ ແກ້ໄຂຄຳສະເໜີຂອງສະມາຊິກ ໃນການປະຕິບັດໜ້າທີ່ວຽກງານ ກໍຄື ການປະກອບວິຊາຊີບ ໃຫ້ມີຄວາມກ້າວໜ້າ ແລະ ມີປະສິດທິຜົນ;
3. ຄຸ້ມຄອງ ແລະ ປົກປ້ອງສິດ ຜົນປະໂຫຍດອັນຊອບທຳຂອງສະມາຊິກ ບົນພື້ນຖານນະໂຍບາຍ ແລະ ລະບຽບກົດໝາຍ;
4. ສະເໜີໃຫ້ມີການນຳໃຊ້ວິທະຍາສາດເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ ກ່ຽວກັບການຈະລາຈອນທາງບົກ;
5. ແລກປ່ຽນບົດຮຽນ, ປະສົບການ ກ່ຽວກັບການຈະລາຈອນທາງບົກ ເພື່ອຍົກລະດັບຄວາມຮູ້, ຄວາມສາມາດຂອງສະມາຊິກ;
6. ລະດົມທຶນຈາກທຸກພາກສ່ວນທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນວຽກງານຈະລາຈອນທາງບົກ;
7. ເພີ່ມທະວີຄວາມສາມັກຄີ ເປັນເອກະພາບພາຍໃນສະມາຄົມ ແລະ ບັນດານັກວິຊາການດ້ວຍກັນ ແລະ ພົວພັນ ຮ່ວມມືກັບສະມາຄົມອື່ນ ທັງພາຍໃນ ແລະ ຕ່າງປະເທດ ຕາມການມອບໝາຍ;
8. ສະຫຼຸບ ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ໝວດທີ 2
## ມູນນິທິກ່ຽວກັບການຈະລາຈອນທາງບົກ

**ມາດຕາ 48 (ໃໝ່) ມູນນິທິ**

ມູນນິທິກ່ຽວກັບການຈະລາຈອນທາງບົກ ແມ່ນ ອົງການຈັດຕັ້ງສັງຄົມໜຶ່ງ ທີ່ບໍ່ຫວັງຜົນກຳໄລ, ສ້າງຕັ້ງ ແລະ ເຄື່ອນໄຫວພາຍໃຕ້ກົດໝາຍ ແລະ ກົດລະບຽບຂອງຕົນ ເພື່ອຊ່ວຍເຫຼືອ, ກອບກູ້ຜູ້ຖືກເຄາະຮ້າຍ ຈາກອຸບປະຕິເຫດທາງຖະໜົນ ປະກອບສ່ວນເຂົ້າໃນວຽກງານຄວາມປອດໄພທາງຖະໜົນ.

**ມາດຕາ 49 (ໃໝ່) ສິດ ແລະ ໜ້າທີ່ ຂອງມູນນິທິ**

**ມູນນິທິ ມີ ສິດ ແລະ ໜ້າທີ່ ຕົ້ນຕໍ ດັ່ງນີ້:**

1. ຊ່ວຍເຫຼືອ ແລະ ກອບກູ້ຜູ້ຖືກເຄາະຮ້າຍຈາກອຸບປະຕິເຫດ ທາງຖະໜົນ;
2. ລະດົມ, ຂົນຂວາຍ ແລະ ຮັບການຊ່ວຍເຫຼືອທາງດ້ານເຕັກນິກ, ວິຊາການ, ທຶນ, ວັດຖູປະກອນ ແລະ ພາຫະນະ ຈາກສັງຄົມ ທັງຢູ່ພາຍໃນ ແລະ ຕ່າງປະເທດ;
3. ນຳໃຊ້ຍານພາຫະນະ, ອຸປະກອນ ວິຊາສະເພາະ ທີ່ເໝາະສົມ ໃນການປະຕິບັດໜ້າທີ່ ຂອງຕົນ;
4. ປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການຊ່ວຍເຫຼືອ ແລະ ກອບກູ້ຜູ້ຖືກເຄາະຮ້າຍຈາກອຸບປະຕິເຫດທາງຖະໜົນ, ແລກປ່ຽນບົດຮຽນ, ປະສົບການກັບມູນນິທິ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ;
5. ສະຫຼຸບ ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນໃຫ້ຂະແໜງການໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ.

# ພາກທີ VI
# ຂໍ້ຫ້າມ

**ມາດຕາ 50 (ໃໝ່) ຂໍ້ຫ້າມທົ່ວໄປ**

**ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:**

1. ທຳລາຍລະບົບສັນຍານຈະລາຈອນຕາມເສັ້ນທາງ ເຊັ່ນ ປ້າຍສັນຍານ, ເຄື່ອງໝາຍ, ໄຟສັນຍານຈະລາຈອນ ລວມທັງສ້າງສິ່ງເປິະເປື້ອນ ແລະ ປິດ ບັງ ປ້າຍສັນຍານຈະລາຈອນ;
2. ຕິດປ້າຍທະບຽນລົດ ທີ່ບໍ່ຖືກຕ້ອງຕາມລະບຽບການ;
3. ຕິດຕັ້ງປ້າຍ, ຕັ້ງປ້າຍໂຄສະນາ, ວາງເຄື່ອງໝາຍ, ວາງເຄື່ອງຂາຍ, ຈັດພິທີ ຕາມເສັ້ນທາງ, ຢູ່ເທິງທາງຍ່າງ ແລະ ເຂດສະຫງວນຂອງທາງ ໂດຍບໍ່ໄດ້ຮັບອະນຸຍາດ;

4. ຫຼິ້ນກິລາຕາມແຄມທາງ, ທາງຄົນຍ່າງ;

5. ກໍ່ສ້າງ, ຕໍ່ເຕີມອາຄານ, ສິ່ງປຸກສ້າງ ເລື່ອມເອົາເຂດສະຫງວນຂອງທາງ;

6. ດຳເນີນກິດຈະການຕ່າງໆ ຢູ່ບ່ອນທາງໂຄ້ງ, ທາງແຄບ ຫຼື ແຄມທາງທີ່ບໍ່ມີບ່ອນຈອດລົດ ທີ່ເປັນອັນຕະລາຍ ແລະ ສ່ງງຕໍ່ການເກີດອຸບປະຕິເຫດ;

7. ຂຸດດິນ, ຖົມດິນ, ກອງດິນ, ກອງວັດສະດຸ ໃສ່ທາງ ແລະ ແຄມທາງ;

8. ຖິ້ມຂີ້ເຫຍື້ອ, ຖອກ ຫຼື ປ່ອຍນ້ຳເປື້ອນ, ນ້ຳໂສໂຄກ, ຖອກນ້ຳມັນ, ລ້າງລົດໃສ່ທາງ ແລະ ແຄມທາງ;

9. ຈອດລົດ ຢູ່ເທິງທາງຍ່າງ, ທາງຄົບ, ທາງແຍກ, ທາງໂຄ້ງ, ທາງທີ່ຫຼີກກັນບໍ່ໄດ້, ທາງເຂົ້າ-ອອກຂົວ ແລະ ໃນຂົວ;

10. ປະປ່ອຍເດັກ ຂ້າມທາງ, ຫຼິ້ນຢູ່ຕາມແຄມທາງ ໂດຍລຳພັງ;

11. ລ້ຽງ, ປ່ອຍສັດລ້ຽງຕາມເສັ້ນທາງ, ເຄື່ອນຍ້າຍສັດລ້ຽງຕາມເສັ້ນທາງ ໂດຍບໍ່ມີຜູ້ຄວບຄຸມ;

12. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 51 (ໃໝ່) ຂໍ້ຫ້າມສຳລັບຜູ້ນຳໃຊ້ເສັ້ນທາງ**

**ຫ້າມ ຜູ້ນຳໃຊ້ເສັ້ນທາງ ມີ ພຶດຕິກຳ ດັ່ງນີ້:**

1. ຂັບຂີ່ໃນສະພາບມຶນເມົາ;

2. ຂັບຂີ່ຍານພາຫະນະ ໄວເກີນກຳນົດ, ຂັບຂີ່ເຈີດຊ້າຍ ເຈີດຂວາ, ຊ່ວງຊີງຍານພາຫະນະອື່ນ ດ້ວຍຄວາມປະໝາດ ແລະ ບໍ່ຖືກຕາມກົດຈະລາຈອນ;

3. ໃຊ້ໂທລະສັບມືຖື, ເຄື່ອງຫຼິ້ນເອເລັກໂຕຣນິກປະເພດຕ່າງໆ ໃນເວລາຍ່າງຂ້າມທາງ;

4. ໃຊ້ໂທລະສັບມືຖື, ເບິ່ງໂທລະພາບ, ຮູບພາບ VCD, DVD ເຄື່ອງຫຼິ້ນເອເລັກໂຕຣນິກປະເພດຕ່າງໆ ໃນເວລາຂັບຂີ່;

5. ຍ່າງຮຽງກັນ ເປັນໜ້າກະດານ, ເປັນພືງ, ເປັນແພ ທີ່ກີດຂວາງການສັນຈອນ;

6. ຂັບຂີ່ລົດຈັກ, ລົດຖີບທຸກຊະນິດ ຮຽງກັນ ທີ່ກີດຂວາງການສັນຈອນ;

7. ຈອດລົດໃຫຍ່ຮຽງກັນຕາມເສັ້ນທາງ ທີ່ກີດຂວາງການສັນຈອນ;

8. ກັ້ງຄັນຮົ່ມໃນເວລາຂັບຂີ່ລົດຈັກ, ລົດຖີບ;

9. ບັນທຸກຜູ້ໂດຍສານເກີນຈຳນວນ, ສິນຄ້າເກີນນ້ຳໜັກ ຫຼື ຂະໜາດ ທີ່ກຳນົດ;

10. ບັນທຸກວັດຖຸອັນຕະລາຍ ໂດຍບໍ່ໄດ້ຮັບອະນຸຍາດ;

11. ສ້ອມແປງຍານພາຫະນະ ຢູ່ກາງທາງ, ກາງຂົວ;

12. ເປີດເຄື່ອງສຽງດັງເກີນກຳນົດໃນເວລາຂັບຂີ່;

13. ແຂ່ງລົດທຸກຊະນິດ ຕາມເສັ້ນທາງ ໂດຍບໍ່ໄດ້ຮັບອະນຸຍາດ;

14. ປະທ່ອນໄມ້, ພືດໄມ້, ກ້ອນຫີນ ຫຼື ສິ່ງກີດຂວາງອື່ນ ທີ່ໝູນຕີນລົດໄວ້ຕາມເສັ້ນທາງ;

15. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 52 (ໃໝ່) ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດກ່ຽວກັບການຈະລາຈອນທາງບົກ**

ຫ້າມ ຜູ້ດຳເນີນທຸລະກິດ ກ່ຽວກັບການຈະລາຈອນທາງບົກ ມີ ພຶດຕິກຳ ດັ່ງນີ້:

1. ໃຫ້ເຊົ່າ ແລະ ໂອນໃບອະນຸຍາດດຳເນີນທຸລະກິດ;
2. ຂາຍ, ມອບໂອນໂຄງການກ່ຽວກັບການຈະລາຈອນທາງບົກໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງໂຄງການ;
3. ດຳເນີນທຸລະກິດ ບໍ່ຖືກຕາມປະເພດທີ່ໄດ້ຮັບອະນຸຍາດ;
4. ສົມຮູ້ຮ່ວມຄິດ, ຊື້ຈ້າງ, ໃຫ້ສິນບົນ ເພື່ອຜົນປະໂຫຍດທາງທຸລະກິດຂອງຕົນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

**ມາດຕາ 53 (ໃໝ່) ຂໍ້ຫ້າມສຳລັບເຈົ້າໜ້າທີ່ຄວບຄຸມການຈະລາຈອນ ແລະ ພະນັກງານທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ຄວບຄຸມການຈະລາຈອນ ແລະ ພະນັກງານທີ່ກ່ຽວຂ້ອງ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດ, ເປັນທີ່ປຶກສາ ຫຼື ເປັນພະນັກງານວິຊາການ ໃຫ້ວິສາຫະກິດ ກ່ຽວກັບການຈະລາຈອນທາງບົກ;
2. ເປີດເຜີຍຂໍ້ມູນ ກ່ຽວກັບການປະມູນໂຄງການ ກໍ່ສ້າງ, ສ້ອມແປງ ແລະ ຕິດຕັ້ງກິດຈະການຈະລາຈອນທາງບົກ;
3. ສົມຮູ້ຮ່ວມຄິດ, ຂໍເອົາ, ທວງເອົາ, ຮັບສິນບົນ, ໃຊ້ອຳນາດເກີນຂອບເຂດ, ປອມແປງເອກະສານ, ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ ແລະ ໝູ່ຄະນະ;
4. ເມີນເສີຍ ຕໍ່ໜ້າທີ່ຮັບຜິດຊອບຂອງຕົນ, ກົດໜ່ວງ ຖ່ວງດຶງເອກະສານ ກ່ຽວກັບການຈະລາຈອນທາງບົກ, ເມີນເສີຍຕໍ່ການກະທຳທີ່ບໍ່ຖືກຕ້ອງຂອງຜູ້ດຳເນີນທຸລະກິດ;
5. ໃຊ້ວາຈາ ທ່າທີ ບໍ່ສຸພາບ, ນາບຂູ່ ຜູ້ນຳໃຊ້ເສັ້ນທາງ ແລະ ຜູ້ຂັບຂີ່ຍານພາຫະນະ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບກົດໝາຍ.

## ພາກທີ VII
## ການແກ້ໄຂຂໍ້ຂັດແຍ່ງ

**ມາດຕາ 54 (ໃໝ່) ຮູບການແກ້ໄຂຂໍ້ຂັດແຍ່ງ**

**ການແກ້ໄຂຂໍ້ຂັດແຍ່ງ ອາດດຳເນີນດ້ວຍຮູບການໃດໜຶ່ງ ດັ່ງນີ້:**

1. ການປະນີປະນອມ;
2. ການແກ້ໄຂທາງດ້ານບໍລິຫານ;
3. ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ການຕັດສິນຂອງສານ;
5. ການແກ້ໄຂທີ່ມີລັກສະນະສາກົນ.

**ມາດຕາ 55 (ໃໝ່) ການປະນີປະນອມ**

ໃນກໍລະນີ ເກີດຂໍ້ຂັດແຍ່ງກ່ຽວກັບການຈະລາຈອນທາງບົກນັ້ນ ຄູ່ກໍລະນີ ສາມາດປຶກສາຫາລື, ເຈລະຈາ ແລະ ປະນີປະນອມກັນ.

**ມາດຕາ 56 (ໃໝ່) ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ເກີດຂໍ້ຂັດແຍ່ງ ກ່ຽວກັບການຈະລາຈອນທາງບົກນັ້ນ ຄູ່ກໍລະນີ ມີສິດສະເໜີຕໍ່ຂະແໜງການທີ່ກ່ຽວຂ້ອງບ່ອນທີ່ຕົນໄດ້ຮັບອະນຸຍາດນັ້ນ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

**ມາດຕາ 57 (ໃໝ່) ການແກ້ໄຂໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ໃນກໍລະນີ ເກີດຂໍ້ຂັດແຍ່ງໃນການດໍາເນີນທຸລະກິດກ່ຽວກັບການຈະລາຈອນທາງບົກນັ້ນ ຄູ່ກໍລະນີ ມີສິດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາແກ້ໄຂຕາມລະບຽບກົດໝາຍ.

**ມາດຕາ 58 (ໃໝ່) ການຕັດສິນຂອງສານ**

ໃນກໍລະນີ ເກີດຂໍ້ຂັດແຍ່ງ ກ່ຽວກັບການຈະລາຈອນທາງບົກນັ້ນ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນ ເພື່ອພິຈາລະນາຕັດສິນຕາມລະບຽບກົດໝາຍ.

**ມາດຕາ 59 (ໃໝ່) ການແກ້ໄຂທີ່ມີລັກສະນະສາກົນ**

ໃນການແກ້ໄຂຂໍ້ຂັດແຍ່ງທີ່ມີລັກສະນະສາກົນ ກ່ຽວກັບການດໍາເນີນທຸລະກິດຈະລາຈອນທາງບົກນັ້ນ ຄູ່ກໍລະນີ ສາມາດສະເໜີຕໍ່ອົງການແກ້ໄຂຂໍ້ຂັດແຍ່ງພາຍໃນ, ຕ່າງປະເທດ ຫຼື ສາກົນ ຕາມການຕົກລົງກັນ ຫຼື ໃຫ້ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ VIII
## ຄະນະກໍາມະການດ້ານຄວາມປອດໄພທາງຫຼວງ

**ມາດຕາ 60 (ໃໝ່) ການສ້າງຕັ້ງຄະນະກໍາມະການດ້ານຄວາມປອດໄພທາງຫຼວງ**

ເພື່ອເຮັດໃຫ້ການຄຸ້ມຄອງ ແລະ ການສົ່ງເສີມ ການຈະລາຈອນທາງບົກ ມີຄວາມສະດວກ, ວ່ອງໄວ, ປອດໄພ, ເຊື່ອມໂຍງເຂົ້າກັບລະບົບການຈະລາຈອນຂອງອາຊຽນ, ພາກພື້ນ ແລະ ສາກົນນັ້ນ ລັດ ສ້າງຕັ້ງຄະນະກໍາມະການດ້ານຄວາມປອດໄພທາງຫຼວງ ຊຶ່ງເປັນການຈັດຕັ້ງທີ່ບໍ່ປະຈໍາການ, ມີພາລະບົດບາດປະສານງານ ກັບພາຍໃນ ແລະ ຕ່າງປະເທດ ໃນການຄຸ້ມຄອງວຽກງານ

ຈະລາຈອນທາງບົກ ໃຫ້ມີຄວາມກ້າວໜ້າ ແລະ ຂະຫຍາຍຕົວ ປະກອບສ່ວນເຂົ້າໃນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

**ມາດຕາ 61 (ໃໝ່) ລະບົບຄະນະກຳມະການດ້ານຄວາມປອດໄພທາງຫຼວງ**

**ລະບົບຄະນະກຳມະການດ້ານຄວາມປອດໄພທາງຫຼວງ ປະກອບດ້ວຍ:**

1. ຄະນະກຳມະການແຫ່ງຊາດດ້ານຄວາມປອດໄພທາງຫຼວງ;
2. ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ແຂວງ, ນະຄອນ;
3. ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ເມືອງ, ເທດສະບານ.

**ມາດຕາ 62 (ໃໝ່) ໂຄງປະກອບຂອງຄະນະກຳມະການແຫ່ງຊາດດ້ານຄວາມປອດໄພທາງຫຼວງ**

**ຄະນະກຳມະການແຫ່ງຊາດດ້ານຄວາມປອດໄພທາງຫຼວງ ປະກອບດ້ວຍ:**

1. ລັດຖະມົນຕີວ່າການ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນປະທານ;
2. ລັດຖະມົນຕີຊ່ວຍວ່າການ ກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ;
3. ລັດຖະມົນຕີຊ່ວຍວ່າການ ກະຊວງ ສຶກສາທິການ ແລະ ກິລາ ເປັນກຳມະການ;
4. ລັດຖະມົນຕີຊ່ວຍວ່າການ ກະຊວງ ສາທາລະນະສຸກ ເປັນກຳມະການ;
5. ລັດຖະມົນຕີຊ່ວຍວ່າການ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
6. ລັດຖະມົນຕີຊ່ວຍວ່າການ ກະຊວງການເງິນ ເປັນກຳມະການ;
7. ປະທານອົງການກາແດງລາວ ເປັນກຳມະການ;
8. ຮອງປະທານສູນກາງສະຫະພັນກຳມະບານລາວ ເປັນກຳມະການ;
9. ຮອງປະທານສູນກາງສະຫະພັນແມ່ຍິງລາວ ເປັນກຳມະການ;
10. ຮອງເລຂາສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ;
11. ຜູ້ຕາງໜ້າ ສະມາຄົມຜູ້ສະໜັບສະໜູນຄວາມປອດໄພທາງຖະໜົນ ເປັນກຳມະການ;
12. ຜູ້ຕາງໜ້າ ມູນນິທິ ກ່ຽວກັບການຈະລາຈອນທາງບົກ ເປັນກຳມະການ.

ຄະນະກຳມະການແຫ່ງຊາດຄວາມປອດໄພທາງຫຼວງ ຖືກແຕ່ງຕັ້ງໂດຍນາຍົກລັດຖະມົນຕີ ແລະ ມີກອງເລຂາ ຕັ້ງຢູ່ ກະຊວງໂຍທາທິການ ແລະ ຂົນສົ່ງ ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການແຫ່ງຊາດດ້ານຄວາມປອດໄພທາງຫຼວງ.

**ມາດຕາ 63 (ໃໝ່) ໂຄງປະກອບຂອງຄະນະກຳມະການດ້ານຄວາມປອດໄພທາງຫຼວງ ແຂວງ, ນະຄອນ**

**ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ແຂວງ, ນະຄອນ ປະກອບດ້ວຍ:**

1. ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ ເປັນປະທານ;
2. ຮອງຫົວໜ້າ ກອງບັນຊາການປ້ອງກັນຄວາມສະຫງົບ ເປັນຮອງປະທານ;
3. ຮອງຫົວໜ້າພະແນກ ສຶກສາທິການ ແລະ ກິລາ ເປັນກຳມະການ;

4. ຮອງຫົວໜ້າພະແນກ ສາທາລະນະສຸກ ເປັນກຳມະການ;

5. ຮອງຫົວໜ້າພະແນກ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;

6. ຮອງຫົວໜ້າພະແນກ ການເງິນ ເປັນກຳມະການ;

7. ຫົວໜ້າຫ້ອງການກາແດງ ແຂວງ, ນະຄອນ ເປັນກຳມະການ;

8. ຮອງປະທານສະຫະພັນກຳມະບານ ແຂວງ, ນະຄອນ ເປັນກຳມະການ;

9. ຮອງປະທານສະຫະພັນແມ່ຍິງ ແຂວງ, ນະຄອນ ເປັນກຳມະການ;

10. ຮອງເລຂາຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນ ເປັນກຳມະການ;

11. ຕົວແທນຂອງ ພາກສ່ວນທຸລະກິດ ທັງພາກລັດ ແລະ ເອກະຊົນ ທີ່ກ່ຽວຂ້ອງ ເປັນກຳມະການ;

12. ຕົວແທນຂອງ ການຈັດຕັ້ງສັງຄົມທີ່ກ່ຽວຂ້ອງ ເປັນກຳມະການ.

ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ແຂວງ, ນະຄອນ ຖືກແຕ່ງຕັ້ງໂດຍເຈົ້າແຂວງ, ເຈົ້າຄອງນະຄອນ ແລະ ມີກອງເລຂາ ຕັ້ງຢູ່ ພະແນກໂຍທາທິການ ແລະ ຂົນສົ່ງ ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການດ້ານຄວາມປອດໄພທາງຫຼວງ ແຂວງ, ນະຄອນ.

**ມາດຕາ 64 (ໃໝ່) ໂຄງປະກອບຂອງຄະນະກຳມະການດ້ານຄວາມປອດໄພທາງຫຼວງ ເມືອງ, ເທດສະບານ**

ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ເມືອງ, ເທດສະບານ ປະກອບດ້ວຍ:

1. ຫົວໜ້າຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເປັນປະທານ;

2. ຮອງຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບ ເປັນຮອງປະທານ;

3. ຮອງຫົວໜ້າຫ້ອງການ ສຶກສາທິການ ແລະ ກິລາ ເປັນກຳມະການ;

4. ຮອງຫົວໜ້າຫ້ອງການ ສາທາລະນະສຸກ ເປັນກຳມະການ;

5. ຮອງຫົວໜ້າຫ້ອງການ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;

6. ຮອງຫົວໜ້າຫ້ອງການ ການເງິນ ເປັນກຳມະການ;

7. ຮອງຫົວໜ້າ ຂະແໜງກາແດງ ເປັນກຳມະການ;

8. ຮອງປະທານສະຫະພັນກຳມະບານ ເມືອງ, ເທດສະບານ ເປັນກຳມະການ;

9. ຮອງປະທານສະຫະພັນແມ່ຍິງ ເມືອງ, ເທດສະບານ ເປັນກຳມະການ;

10. ຮອງເລຂາຄະນະຊາວໜຸ່ມ ປະຊາຊົນ ປະຕິວັດລາວ ເມືອງ, ເທດສະບານ ເປັນກຳມະການ;

11. ຕົວແທນຂອງ ພາກສ່ວນທຸລະກິດ ທັງພາກລັດ ແລະ ເອກະຊົນ ທີ່ກ່ຽວຂ້ອງ ເປັນກຳມະການ;

12. ຕົວແທນຂອງ ການຈັດຕັ້ງສັງຄົມທີ່ກ່ຽວຂ້ອງ ເປັນກຳມະການ.

ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ເມືອງ, ເທດສະບານ ຖືກແຕ່ງຕັ້ງ ໂດຍ ເຈົ້າເມືອງ, ຫົວໜ້າເທດສະບານ ແລະ ມີກອງເລຂາ ຕັ້ງຢູ່ ຫ້ອງການໂຍທາທິການ ແລະ ຂົນສົ່ງ ຊຶ່ງຖືກແຕ່ງຕັ້ງໂດຍປະທານຄະນະກຳມະການດ້ານຄວາມປອດໄພທາງຫຼວງ ເມືອງ, ເທດສະບານ.

**ມາດຕາ 65 (ໃໝ່) ສິດ ແລະ ໜ້າທີ່ຂອງ ຄະນະກຳມະການດ້ານຄວາມປອດໄພທາງຫຼວງ**

ຄະນະກຳມະການດ້ານຄວາມປອດໄພທາງຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງກົດລະບຽບພາຍໃນ, ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານດ້ານຄວາມປອດໄພທາງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ ແລະ ແຜນດຳເນີນງານດ້ານຄວາມປອດໄພທາງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
3. ແນະນຳ, ຕິດຕາມ, ກວດກາ, ຊຸກຍູ້ ແລະ ປະສານສົມທົບກັບບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານຄວາມປອດໄພທາງຫຼວງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
4. ລະດົມ, ຄຸ້ມຄອງ ແລະ ນຳໃຊ້ທຶນ ທີ່ໄດ້ຮັບການສະໜັບສະໜູນ ຈາກພາຍໃນ ແລະ ຕ່າງປະເທດເຂົ້າໃນວຽກງານຄວາມປອດໄພທາງຫຼວງ ໃຫ້ມີປະສິດທິຜົນຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ຕາມການມອບໝາຍ;
6. ສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານ ຕໍ່ຂະແໜງການຂັ້ນເທິງຂອງຕົນ;
7. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ການມອບໝາຍ.

# ພາກທີ IX
# ການຄຸ້ມຄອງ ແລະ ການກວດກາວຽກງານຈະລາຈອນທາງບົກ
## ໝວດທີ 1
## ການຄຸ້ມຄອງວຽກງານຈະລາຈອນທາງບົກ

**ມາດຕາ 66 (ປັບປຸງ) ອົງການຄຸ້ມຄອງວຽກງານຈະລາຈອນທາງບົກ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານຈະລາຈອນທາງບົກ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ຮັບຜິດຊອບໂດຍກົງ ທັງເປັນເຈົ້າການ ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ບັນດາກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

**ອົງການຄຸ້ມຄອງວຽກງານຈະລາຈອນທາງບົກ ປະກອບດ້ວຍ:**

1. ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກະຊວງປ້ອງກັນຄວາມສະຫງົບ;
2. ພະແນກໂຍທາທິການ ແລະ ຂົນສົ່ງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ;
3. ຫ້ອງການໂຍທາທິການ ແລະ ຂົນສົ່ງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ;
4. ອົງການປົກຄອງບ້ານ.

**ມາດຕາ 67 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ກະຊວງໂຍທາທິການ ແລະ ຂົນສົ່ງ**

**ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ກະຊວງໂຍທາທິການ ແລະ ຂົນສົ່ງ ມີສິດ ແລະ ໜ້າທີ່ ດັ່ງນີ້:**

1. ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ, ແຜນດຳເນີນງານ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານຈະລາຈອນທາງບົກ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ ກ່ຽວກັບວຽກງານຈະລາຈອນທາງບົກ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ພ້ອມທັງຊີ້ນຳ, ຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດ ໃຫ້ມີປະສິດທິຜົນ;
3. ຄົ້ນຄວ້າ ກຳນົດໝາຍ ແລະ ມາດຕະຖານເຕັກນິກ, ຄົ້ນຄວ້າ ແລະ ເລືອກເຟັ້ນເຕັກໂນໂລຊີ ທີ່ເໝາະສົມ ກ່ຽວກັບການຈະລາຈອນທາງບົກ ພ້ອມທັງອອກຄຳແນະນຳໃນການຈັດຕັ້ງປະຕິບັດ;
4. ຄຸ້ມຄອງ ມາດຕະຖານເຕັກນິກ ຍານພາຫະນະ ແລະ ສິ້ນສ່ວນ, ມາດຕະຖານເຕັກນິກ ປ້າຍລົດ ແລະ ການນຳໃຊ້ເຕັກໂນໂລຊີ ກ່ຽວກັບການຜະລິດໃບທະບຽນ ແລະ ປ້າຍລົດ;
5. ປະສານສົມທົບກັບ ກະຊວງປ້ອງກັນຄວາມສະຫງົບ, ກະຊວງ, ອົງການອື່ນ ທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນດຳເນີນງານ ກ່ຽວກັບວຽກງານຈະລາຈອນທາງບົກ;
6. ຮັບຜິດຊອບຂໍ້ມູນການຄຸ້ມຄອງ ກໍຄືການຂຶ້ນທະບຽນພາຫະນະ ເພື່ອພິມໃບທະບຽນໃຫ້ຖືກຕ້ອງ;
7. ຄົ້ນຄວ້າ, ວິໄຈຂໍ້ມູນ, ສະຖິຕິອຸບປະຕິເຫດ ແລະ ສັງລວມປະລິມານການສັນຈອນຕາມເສັ້ນທາງ;
8. ອອກລະບຽບການຄຸ້ມຄອງ ຍານພາຫະນະ ແລະ ປ້າຍທະບຽນ, ຄຸ້ມຄອງການອອກໃບທະບຽນ, ການຜະລິດ ແລະ ຕິດປ້າຍທະບຽນ ລວມທັງການສະໜອງໃຫ້ບັນດາແຂວງ ແລະ ການປະມູນປ້າຍທະບຽນເລກງາມ, ການຝຶກອົບຮົມ, ການສອບເສັງ ແລະ ອອກໃບຂັບຂີ່ ໃນຂອບເຂດທົ່ວປະເທດ;
9. ສ້າງ, ບຳລຸງ, ຍົກລະດັບບຸກຄະລາກອນ ດ້ານການຈະລາຈອນທາງບົກ;

10. ພົວພັນ, ຮ່ວມມືກັບຕ່າງປະເທດ, ອານຸພາກພື້ນ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຈະລາຈອນທາງບົກ;

11. ສະຫລຸບ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈະລາຈອນທາງບົກ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;

12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 68 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ກະຊວງປ້ອງກັນຄວາມສະຫງົບ**

**ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ກະຊວງປ້ອງກັນຄວາມສະຫງົບ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ປະກອບຄໍາເຫັນໃສ່ຮ່າງນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍ ກ່ຽວກັບວຽກງານຈະລາຈອນທາງບົກ ແລ້ວສົ່ງຄືນໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ;

2. ຜັນຂະຫຍາຍນະໂຍບາຍ, ແຜນຍຸດທະສາດ, ລະບຽບກົດໝາຍ ກ່ຽວກັບການຈະລາຈອນທາງບົກ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ;

3. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍ ກ່ຽວກັບການຈະລາຈອນທາງບົກ ແນໃສ່ປູກຈິດສໍານຶກໃຫ້ແກ່ປະຊາຊົນໃນການປະກອບສ່ວນເຂົ້າໃນວຽກງານຈະລາຈອນທາງບົກ;

4. ປະສານສົມທົບກັບ ກະຊວງໂຍທາທິການ ແລະ ຂົນສົ່ງ, ກະຊວງ, ອົງການອື່ນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນໃນການຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນດໍາເນີນງານ ກ່ຽວກັບວຽກງານຈະລາຈອນທາງບົກ;

5. ຊີ້ນໍາ, ຕິດຕາມ, ອໍານວຍຄວາມສະດວກ ແລະ ຄວບຄຸມການຈະລາຈອນ ຕາມເສັ້ນທາງ;

6. ກວດກາ ຂໍ້ມູນຍານພາຫະນະ ທີ່ຈະນໍາເອົາໄປຜະລິດປ້າຍລົດ;

7. ຄຸ້ມຄອງທະບຽນ, ຮັບຜິດຊອບຜະລິດ, ຕິດປ້າຍ ແລະ ການນໍາໃຊ້ປ້າຍລົດ;

8. ຄຸ້ມຄອງຄວາມປອດໄພ ແລະ ຈັດສັນຄວາມເປັນລະບຽບຮຽບຮ້ອຍ ຂອງການຈະລາຈອນທາງບົກ, ຄົ້ນຄວ້າວິໄຈ ຂໍ້ມູນອຸບປະຕິເຫດ, ສັງລວມປະລິມານການສັນຈອນຕາມເສັ້ນທາງ ເພື່ອວາງແຜນປ້ອງກັນ ແລະ ສະກັດກັ້ນອຸບປະຕິເຫດທາງຖະໜົນ;

9. ຕິດຕາມ ແລະ ປະເມີນຜົນການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບການຈະລາຈອນທາງບົກ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ໃນຂອບເຂດທົ່ວປະເທດ;

10. ຄຸ້ມຄອງ ແລະ ຍົກລະດັບ ຕໍາຫຼວດຈະລາຈອນ, ຕໍາຫຼວດທາງຫຼວງ ທັງສູນກາງ ແລະ ທ້ອງຖິ່ນ ພ້ອມທັງປະກອບວັດຖູປະກອນ ແລະ ຍານພາຫະນະ ທີ່ຈໍາເປັນໃນການປະຕິບັດໜ້າທີ່;

11. ຊີ້ນໍາ, ນໍາພາ, ຕິດຕາມ, ຊຸກຍູ້ການປະຕິບັດໜ້າທີ່ຂອງ ຕໍາຫຼວດຈະລາຈອນ, ຕໍາຫຼວດທາງຫຼວງ ຢ່າງເຂັ້ມງວດ;

12. ອອກຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ລະບຽບການ ເພື່ອຄຸ້ມຄອງວຽກງານຈະລາຈອນທາງບົກ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

13. ສະຫຼຸບ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຂອງຕົນ ໃຫ້ລັດຖະບານຢ່າງເປັນປົກກະຕິ;

14. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ມາດຕາ 69 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ**

**ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ພະແນກໂຍທາທິການ ແລະ ຂົນສົ່ງແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນດໍາເນີນງານ ກ່ຽວກັບວຽກງານຈະລາຈອນທາງບົກ ໃນຂອບເຂດແຂວງ, ນະຄອນຂອງຕົນ;

2. ປະສານສົມທົບກັບກອງບັນຊາການປ້ອງກັນຄວາມສະຫງົບ, ພະແນກການອື່ນຂອງແຂວງ, ນະຄອນໃນການສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ ເພື່ອປູກຈິດສໍານຶກໃຫ້ແກ່ປະຊາຊົນກ່ຽວກັບວຽກງານຈະລາຈອນທາງບົກ;

3. ຄົ້ນຄວ້າ, ວິໄຈຂໍ້ມູນ, ສະຖິຕິອຸບປະຕິເຫດ ແລະ ສັງລວມຈໍານວນຍານພາຫະນະ ແລະ ປະລິມານການສັນຈອນຕາມເສັ້ນທາງໃນຂອບເຂດ ແຂວງ, ນະຄອນ;

4. ຄຸ້ມຄອງການຂຶ້ນທະບຽນຍານພາຫະນະ, ຄວາມປອດໄພ ໃນການຈະລາຈອນທາງບົກ ແລະ ການຂັບຂີ່, ໂຮງຮຽນສອນຂັບຂີ່, ສູນຝຶກການຂັບຂີ່, ການສອບເສັງໃບຂັບຂີ່, ສູນກວດກາເຕັກນິກ, ອູ່ສ້ອມແປງຍານພາຫະນະ ແລະ ກິດຈະການອື່ນ ກ່ຽວກັບການຈະລາຈອນທາງບົກ;

5. ປ້ອນຂໍ້ມູນ ຍານພາຫະນະ ເພື່ອພິມໃບທະບຽນ;

6. ສ້າງບົດສະເໜີໂຄງການເພື່ອຄົ້ນຄວ້າຊອກແຫຼ່ງທຶນພາຍໃນ ແລະ ຕ່າງປະເທດມາພັດທະນາວຽກງານຈະລາຈອນທາງບົກ ພາຍໃນແຂວງ, ນະຄອນຂອງຕົນ;

7. ຄຸ້ມຄອງ, ຕິດຕັ້ງປ້າຍ ແລະ ເຄື່ອງໝາຍຈະລາຈອນທາງບົກ, ຕິດຕາມ, ປົກປັກຮັກສາປ້າຍ, ເຄື່ອງໝາຍຈະລາຈອນຕາມເສັ້ນທາງ ເພື່ອບໍ່ໃຫ້ຖືກທໍາລາຍ;

8. ຈັດຕັ້ງການສອບເສັງ, ອອກໃບຂັບຂີ່, ຂຶ້ນທະບຽນ, ຕິດປ້າຍທະບຽນ ຍານພາຫະນະ ໃນຂອບເຂດ ແຂວງ, ນະຄອນ;

9. ສະຫລຸບ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈະລາຈອນທາງບົກ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ, ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;

10.ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ແລະຕາມການມອບໝາຍ.

**ມາດຕາ 70 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ**

**ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນດຳເນີນງານ ກ່ຽວກັບການຈະລາຈອນທາງບົກ ໃນຂອບເຂດແຂວງ, ນະຄອນຂອງຕົນ;

2. ປະສານສົມທົບກັບ ພະແນກໂຍທາທິການ ແລະ ຂົນສົ່ງ, ພະແນກການອື່ນຂອງແຂວງ, ນະຄອນ ໃນການສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ ເພື່ອປູກຈິດສຳນຶກໃຫ້ແກ່ປະຊາຊົນກ່ຽວກັບວຽກງານຈະລາຈອນທາງບົກ;

3. ຕິດຕາມ ການເຄົາລົບ ແລະ ການປະຕິບັດລະບຽບກົດໝາຍ ຂອງຜູ້ຂັບຂີ່ ແລະ ຍານພາຫະນະທຸກຊະນິດ ຕາມເສັ້ນທາງຢ່າງເຂັ້ມງວດ ເພື່ອປ້ອງກັນຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງການຈະລາຈອນ;

4. ກວດກາ ຂໍ້ມູນຍານພາຫະນະ ກ່ອນການຜະລິດ ຫຼື ຕິດປ້າຍລົດ;

5. ຜະລິດ ແລະ ຕິດປ້າຍລົດ ຕາມການມອບໝາຍຂອງກະຊວງປ້ອງກັນຄວາມສະຫງົບ;

6. ຄົ້ນຄວ້າ, ວິໄຈຂໍ້ມູນ, ສະໜອງສະຖິຕິອຸບປະຕິເຫດ ແລະ ສັງລວມປະລິມານການສັນຈອນຕາມເສັ້ນທາງໃນຂອບເຂດ ແຂວງ, ນະຄອນ ເພື່ອວາງແຜນປ້ອງກັນ ແລະ ສະກັດກັ້ນຕາມຄວາມຮັບຜິດຊອບຂອງຕົນ;

7. ຄົ້ນຄວ້າ ແກ້ໄຂຄະດີອຸບປະຕິເຫດທາງຖະໜົນ ພາຍໃນແຂວງ, ນະຄອນຂອງຕົນ ຕາມລະບຽບກົດໝາຍ;

8. ຄຸ້ມຄອງ ແລະ ຊີ້ນຳໂດຍກົງ ຕຳຫຼວດຈະລາຈອນ, ຕຳຫຼວດທາງຫຼວງ ເມືອງ, ເທດສະບານ;

9. ສະຫຼຸບ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈະລາຈອນທາງບົກ ໃຫ້ກະຊວງປ້ອງກັນຄວາມສະຫງົບ, ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 71 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ**

**ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ຫ້ອງການໂຍທາທິການ ແລະ ຂົນສົ່ງ, ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ແຜນດຳເນີນງານ ກ່ຽວກັບວຽກງານ ຈະລາຈອນທາງບົກ ພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ປະສານສົມທົບກັບກອງບັນຊາການປ້ອງກັນຄວາມສະຫງົບ, ຫ້ອງການອື່ນ ຂອງເມືອງ, ເທດສະບານ ໃນການສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ ເພື່ອປູກຈິດສຳນຶກໃຫ້ແກ່ປະຊາຊົນກ່ຽວກັບວຽກງານຈະລາຈອນທາງບົກ;

3. ຈັດຕັ້ງ, ຄຸ້ມຄອງການຂຶ້ນທະບຽນ, ການສອບເສັງໃບຂັບຂີ່ປະເພດລົດຈັກສອງລໍ້, ລົດໄຖນາ, ລົດຕໍ່ອກໆ ພາຍໃນເມືອງ, ເທດສະບານ ຂອງຕົນ;

4. ປະກອບຄຳເຫັນກ່ຽວກັບການອອກອະນຸຍາດດຳເນີນທຸລະກິດ ເຊັ່ນ ຮ້ານສ້ອມແປງລົດ, ເຄາະຈອດພົ່ນສີລົດ, ຈອດຢາງລົດ, ລ້າງອັດສີດ, ໂຮງຊຸ່ນ, ໂຮງກຶງ, ຮ້ານຂາຍເຄື່ອງອາໄຫຼ່, ຮ້ານຕົບແຕ່ງລົດ ແລະ ກິດຈະການອື່ນກ່ຽວກັບການຈະລາຈອນທາງບົກ;

5. ຄຸ້ມຄອງ, ຕິດຕັ້ງປ້າຍ ແລະ ເຄື່ອງໝາຍຈະລາຈອນທາງບົກ ຕາມຄວາມຮັບຜິດຊອບຂອງຕົນ;

6. ເຂົ້າຮ່ວມໃນການແກ້ໄຂອຸບປະຕິເຫດ ທີ່ເກີດຂຶ້ນໃນຂອບເຂດເມືອງ, ເທດສະບານຂອງຕົນ ຕາມລະບຽບກົດໝາຍ;

7. ຄຸ້ມຄອງ ອູ່ສ້ອມແປງຍານພາຫະນະ, ການກວດກາເຕັກນິກ ລົດຈັກ, ລົດໄຖນາ ຕາມຄວາມຮັບຜິດຊອບ ຂອງຕົນ;

8. ເກັບກຳຂໍ້ມູນ ອຸບປະຕິເຫດທາງຖະໜົນ ແລະ ປະລິມານການສັນຈອນ ໃນຂອບເຂດ ເມືອງ, ເທດສະບານ ຂອງຕົນ;

9. ສະຫຼຸບ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈະລາຈອນທາງບົກ ໃຫ້ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງ, ນະຄອນ ແລະ ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;

10. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 72 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ**

**ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ກອງບັນຊາການປ້ອງກັນຄວາມສະຫງົບ ເມືອງ, ເທດສະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ແຜນດຳເນີນງານ ກ່ຽວກັບວຽກງານຈະລາຈອນທາງບົກ ຕາມຄວາມຮັບຜິດຊອບຂອງຕົນ;

2. ປະສານສົມທົບກັບຫ້ອງການໂຍທາທິການ ແລະ ຂົນສົ່ງ, ຫ້ອງການອື່ນ ຂອງເມືອງ, ເທດສະບານ ໃນການສຶກສາອົບຮົມ, ໂຄສະນາ, ເຜີຍແຜ່ ເພື່ອປູກຈິດສຳນຶກໃຫ້ປະຊາຊົນກ່ຽວກັບວຽກງານຈະລາຈອນທາງບົກ;

3. ປະສານສົມທົບ ກັບຫ້ອງການ ໂຍທາທິການ ແລະ ຂົນສົ່ງ ເມືອງ, ເທດສະບານ ໃນການປົກປັກຮັກສາປ້າຍ, ເຄື່ອງໝາຍຈະລາຈອນຕາມເສັ້ນທາງ ເພື່ອບໍ່ໃຫ້ຖືກທຳລາຍຕາມຄວາມຮັບຜິດຊອບຂອງຕົນ;

4. ຈັດສັນຄວາມເປັນລະບຽບຮຽບຮ້ອຍຕາມເສັ້ນທາງ, ສະຖານທີ່ຈອດລົດສາທາລະນະ ແລະ ອຳນວຍຄວາມສະດວກ, ຄວບຄຸມການສັນຈອນ ໃຫ້ມີຄວາມສະດວກ, ປອດໄພ ແລະ ໂລ່ງລ່ຽນ;

5. ຊັນນະສູດ, ສືບສວນ-ສອບສວນ, ແກ້ໄຂ ແລະ ປະກອບສໍານວນຄະດີ ອຸບປະຕິເຫດທາງຖະໜົນ ທີ່ເກີດຂຶ້ນໃນຂອບເຂດເມືອງ, ເທດສະບານ ຕາມລະບຽບກົດໝາຍ;

6. ເກັບກໍາຂໍ້ມູນອຸບປະຕິເຫດຕາມເສັ້ນທາງ ແລະ ປະລິມານການສັນຈອນໃນຂອບເຂດເມືອງ, ເທດສະບານຂອງຕົນ;

7. ສະຫຼຸບ ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຈະລາຈອນທາງບົກ ໃຫ້ກອງບັນຊາການປ້ອງກັນຄວາມສະຫງົບ ແຂວງ, ນະຄອນ ແລະ ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;

8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍ.

ມາດຕາ 73 (ໃໝ່) **ສິດ ແລະ ໜ້າທີ່ ຂອງ ອົງການປົກຄອງບ້ານ**

**ໃນການຄຸ້ມຄອງວຽກງານຈະລາຈອນທາງບົກ ອົງການປົກຄອງບ້ານ ມີ ສິດ ແລະ ໜ້າທີ່ຕົ້ນຕໍ ດັ່ງນີ້:**

1. ເຜີຍແຜ່ຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາ ກ່ຽວກັບການຈະລາຈອນທາງບົກໃຫ້ແກ່ປະຊາຊົນພາຍໃນຂອບເຂດ ບ້ານຂອງຕົນ;

2. ປຸກລະດົມປະຊາຊົນ ໃນການປະກອບສ່ວນປົກປັກຮັກສາປ້າຍສັນຍານ, ໄຟສັນຍານ, ເຄື່ອງໝາຍຈະລາຈອນຕາມເສັ້ນທາງໃນຂອບເຂດບ້ານຂອງຕົນ ພ້ອມທັງລາຍງານການເປ່ເພເສັຍຫາຍຂອງປ້າຍ, ໄຟສັນຍານ, ເຄື່ອງໝາຍຈະລາຈອນ ໃຫ້ຫ້ອງການໂຍທາທິການ ແລະ ຂົນສົ່ງເມືອງ, ເທດສະບານ ຢ່າງທັນການ;

3. ເຂົ້າຮ່ວມ, ຊ່ວຍຄວບຄຸມສະຖານທີ່ອຸບປະຕິເຫດ ທີ່ເກີດຂຶ້ນຕາມເສັ້ນທາງໃນຂອບເຂດບ້ານຂອງຕົນ ພ້ອມທັງລາຍງານໃຫ້ຕໍາຫຼວດຈະລາຈອນ, ຕໍາຫຼວດທາງຫຼວງຂອງ ເມືອງ, ເທດສະບານທີ່ຕົນຂຶ້ນກັບຢ່າງທັນການ;

4. ອໍານວຍຄວາມສະດວກ ແລະ ໃຫ້ການຮ່ວມມືກັບເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ;

5. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 2
## ການກວດກາວຽກງານຈະລາຈອນທາງບົກ

**ມາດຕາ 74 (ໃໝ່) ອົງການກວດກາ**

**ອົງການກວດກາວຽກງານຈະລາຈອນທາງບົກ ມີ ສອງ ປະເພດ ດັ່ງນີ້:**

1. ອົງການກວດກາພາຍໃນ ແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານຈະລາຈອນທາງບົກ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 66 ຂອງກົດໝາຍສະບັບນີ້.

2. ອົງການກວດກາພາຍນອກ ມີ:

- ສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ;
- ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດກາລັດ;
- ອົງການກວດສອບແຫ່ງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ການກວດສອບແຫ່ງລັດ;
- ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ປະຊາຊົນ ແລະ ສື່ມວນຊົນ.

ການກວດກາພາຍນອກ ມີຈຸດປະສົງ ກວດກາການປະຕິບັດໜ້າທີ່ຂອງອົງການຄຸ້ມຄອງ ແລະ ກວດກາວຽກງານຈະລາຈອນທາງບົກ ເພື່ອໃຫ້ມີຄວາມເຂັ້ມແຂງ, ໂປ່ງໃສ, ຍຸຕິທຳ ແລະ ມີປະສິດທິຜົນ.

**ມາດຕາ 75 (ໃໝ່) ສິດ ແລະ ໜ້າທີ່ຂອງ ອົງການກວດກາ**

ໃນການກວດກາວຽກງານຈະລາຈອນທາງບົກ ອົງການກວດກາ ມີ ສິດ ແລະ ໜ້າທີ່ປະຕິບັດຕາມເນື້ອໃນ ແລະ ຮູບການທີ່ໄດ້ກຳນົດໄວ້ ໃນມາດຕາ 76 ແລະ 77 ຂອງກົດໝາຍສະບັບນີ້.

**ມາດຕາ 76 (ໃໝ່) ເນື້ອໃນການກວດກາ**

**ການກວດກາວຽກງານຈະລາຈອນທາງບົກ ມີ ເນື້ອໃນ ຕົ້ນຕໍ ດັ່ງນີ້:**

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ແຜນດຳເນີນງານ, ລະບຽບກົດໝາຍ ກ່ຽວກັບການຈະລາຈອນທາງບົກ;
2. ໂຄງການກໍ່ສ້າງ, ຕິດຕັ້ງ, ສ້ອມແປງ ແລະ ບູລະນະລະບົບສັນຍານຈະລາຈອນ;
3. ການປະຕິບັດມາດຕະການປ້ອງກັນຄວາມປອດໄພ ຕາມເສັ້ນທາງ, ການແກ້ໄຂຜົນກະທົບຕໍ່ຊີວິດ, ສຸຂະພາບ, ຊັບສິນຂອງປະຊາຊົນ, ຂອງສາທາລະນະ ແລະ ຕໍ່ສິ່ງແວດລ້ອມ;
4. ການດຳເນີນກິດຈະການ ກ່ຽວກັບການສ້ອມແປງ, ດັດແປງ, ກວດກາເຕັກນິກຍານພາຫະນະ, ການຝຶກອົບຮົມ, ການສິດສອນ ແລະ ການສອບເສັງໃບຂັບຂີ່;

5. ເອກະສານຂອງຜູ້ຂັບຂີ່, ເອກະສານ ແລະ ປ້າຍທະບຽນຂອງຍານພາຫະນະ, ທາດເຫຼົ້າໃນລົມຫາຍໃຈຂອງຜູ້ຂັບຂີ່ ແລະ ຄວາມໄວຂອງການສັນຈອນຂອງຍານພາຫະນະທຸກຊະນິດ ຊຶ່ງມອບໃຫ້ຕຳຫຼວດຈະລາຈອນ ແລະ ຕຳຫຼວດທາງຫຼວງ ເປັນຜູ້ກວດກາ.

ນອກຈາກນີ້ ການກວດກາ ຍັງໃຫ້ປະຕິບັດຕາມເນື້ອໃນການກວດກາ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

ມາດຕາ 77 (ໃໝ່) **ຮູບການ ການກວດກາ**

**ການກວດກາວຽກງານຈະລາຈອນທາງບົກ ມີ ສາມຮູບການ ດັ່ງນີ້:**

1. ການກວດກາຢ່າງເປັນລະບົບປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາການຈະລາຈອນທາງບົກນັ້ນ ໃຫ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ຢ່າງເຂັ້ມງວດ.

## ພາກທີ X
## ສັບປະດາແຫ່ງຊາດດ້ານຄວາມປອດໄພທາງຖະໜົນ, ເຄື່ອງແບບ ແລະ ເຄື່ອງໝາຍ

ມາດຕາ 78 (ໃໝ່) **ສັບປະດາແຫ່ງຊາດ ດ້ານຄວາມປອດໄພທາງຖະໜົນ**

ສັບປະດາແຫ່ງຊາດ ດ້ານ ຄວາມປອດໄພທາງຖະໜົນ ໃຫ້ກຳນົດເອົາສັບປະດາທຳອິດຂອງເດືອນເມສາ.

ໃນແຕ່ລະປີ ກະຊວງໂຍທາທິການ ແລະຂົນສົ່ງ ເປັນເຈົ້າການປະສານສົມທົບກັບກະຊວງປ້ອງກັນຄວາມສະຫງົບ, ບັນດາກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນໃນການຂຶ້ນແຜນ, ປຸກລະດົມກຳລັງແຮງ, ຍານພາຫະນະ, ວັດຖູປະກອນ ແລະ ທຶນຮອນຈາກ ທຸກພາກສ່ວນໃນສັງຄົມ ເພື່ອປະກອບສ່ວນເຂົ້າໃນການດຳເນີນກິດຈະກຳກ່ຽວກັບຄວາມປອດໄພທາງຖະໜົນໃນສັບປະດາດັ່ງກ່າວ ຢ່າງກວ້າງຂວາງ.

ມາດຕາ 79 (ໃໝ່) **ເຄື່ອງແບບ ແລະ ເຄື່ອງໝາຍ**

ເຄື່ອງແບບ, ເຄື່ອງໝາຍ ຂອງຕຳຫຼວດຈະລາຈອນ ແລະ ຕຳຫຼວດທາງຫຼວງ ໃຫ້ກະຊວງປ້ອງກັນຄວາມສະຫງົບ ເປັນຜູ້ກຳນົດ.

ເຄື່ອງແບບ, ເຄື່ອງໝາຍ ຂອງເຈົ້າໜ້າທີ່ໂຍທາທິການ ແລະ ຂົນສົ່ງ ໃຫ້ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ກຳນົດ.

## ພາກທີ XI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 80 **ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການປະກອບສ່ວນເຂົ້າໃນວຽກງານຄວາມປອດໄພທາງຖະໜົນ, ຄວາມເປັນລະບຽບຮຽບຮ້ອຍໃນການຈະລາຈອນ ແລະ ການປົກປັກຮັກສາສິ່ງແວດລ້ອມຕາມເສັ້ນທາງ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ມາດຕາ 81 **ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ດຳເນີນຄະດີຕາມກົດໝາຍ ແລ້ວແຕ່ກໍລະນີ ເບົາ ຫຼື ໜັກ.

ມາດຕາ 82 **ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

ມາດຕາ 83 (ໃໝ່) **ມາດຕະການທາງວິໄນ**

ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງບົກ ແລະ ພະນັກງານທີ່ກ່ຽວຂ້ອງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສັຍຫາຍບໍ່ຫຼວງຫຼາຍ ແລະ ບໍ່ຈິງໃຈລາຍງານການກະທຳຜິດ, ຫຼົບຫຼີກຈາກຄວາມຜິດຂອງຕົນ ຈະຖືກລົງວິໄນຕາມລະບຽບການ ເຊັ່ນ ກ່າວເຕືອນຄວາມຜິດ, ໂຈະການເລື່ອນຊັ້ນ ຫຼື ໃຫ້ອອກຈາກລັດຖະການ.

**ມາດຕາ 84 (ປັບປຸງ) ມາດຕະການປັບໃໝ**

**ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ໃນກໍລະນີ ດັ່ງນີ້:**

- ຂັບຂີ່ຍານພາຫະນະໃນສະພາບມຶນເມົາ ເກີນອັດຕາທີ່ກຳນົດ;
- ຂັບຂີ່ຍານພາຫະນະດ້ວຍຄວາມໄວເກີນກຳນົດ;
- ຂັບຂີ່ລົດຈັກ ບໍ່ໃສ່ໝວກກັນກະທົບ;
- ກັ້ງຄັນຮົ່ມຂີ່ລົດຈັກ;
- ໃຊ້ໂທລະສັບ, ເບິ່ງໂທລະພາບ ຫຼື ຫຼິ້ນເຄື່ອງເອເລັກໂຕຣນິກ ໃນເວລາຂັບຂີ່;
- ລະເມີດ ໄຟອຳນາດ, ປ້າຍສັນຍານ ແລະ ເຄື່ອງໝາຍຈະລາຈອນທາງບົກ;
- ບໍ່ມີ ໃບຂັບຂີ່ ຕາມປະເພດຍານພາຫະນະ ທີ່ຕົນຂັບ, ບໍ່ມີເອກະສານຍານພາຫະນະ;
- ແລ່ນຜິດທາງ ທີ່ກຳນົດໄວ້;
- ແລ່ນລົດ ທີ່ມີສຽງດັງເກີນມາດຕະຖານ;
- ໄຕ້ໄຟຕາສູງບໍ່ຖືກຕາມກົດຈະລາຈອນ;
- ບໍ່ໄຕ້ໄຟຕາໃນຍາມກາງຄືນ;
- ໄຕ້ໄຟຕາດຽວ ສຳລັບລົດສີ່ລໍ້ຂຶ້ນໄປ;
- ບໍ່ໄຕ້ໄຟຕາໃນຍາມກາງເວັນເວລາສະພາບອາກາດມືດມົວ ເຊັ່ນ ຝົນຕົກແຮງ, ໝອກລົງໜາ, ຂີ້ຝຸ່ນໄຈ່;
- ມີຄວັນດຳ, ຄວັນຂາວ ເກີນມາດຕະຖານ;
- ບໍ່ມີຫ້າມລໍ້ ຫຼື ບໍ່ໄດ້ມາດຕະຖານເຕັກນິກ, ບໍ່ມີແວ່ນສ່ອງຫລັງ;
- ສ້າງຄວາມເປິະເປື້ອນ ຫຼື ສິ່ງກີດຂວາງຕາມເສັ້ນທາງ;
- ບັນທຸກເກີນນ້ຳໜັກ, ເກີນຂະໜາດ, ເກີນຈຳນວນ;
- ດັດແປງເຕັກນິກ ຂອງຍານພາຫະນະ ໂດຍບໍ່ໄດ້ຮັບອະນຸຍາດ;
- ລະເມີດກົດຈະລາຈອນ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.

ສຳລັບອັດຕາປັບໃໝ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 85 (ໃໝ່) ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ແລະ ໄດ້ກໍ່ຄວາມເສັຍຫາຍ ຕ້ອງໃຊ້ແທນຄ່າເສັຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 86 ມາດຕະການທາງອາຍາ**

ບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມກົດໝາຍອາຍາ.

ມາດຕາ 87 (ໃໝ່) **ມາດຕະການໂທດເພີ່ມ**

ນອກຈາກ ໂທດຕົ້ນຕໍທີ່ໄດ້ກຳນົດໄວ້ໃນມາດຕາ 86 ຂອງກົດໝາຍສະບັບນີ້ແລ້ວ ຜູ້ກະທຳຜິດຍັງຈະຖືກປະຕິບັດໂທດເພີ່ມ ເຊັ່ນ ຕັດຄະແນນຂອງໃບຂັບຂີ່ ຫຼື ຖອນໃບຂັບຂີ່ ຕາມລະບຽບການສະເພາະ.

## ພາກທີ XII
## ບົດບັນຍັດສຸດທ້າຍ

ມາດຕາ 88 **ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

ມາດຕາ 89 **ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ທົກສິບ ວັນ ນັບແຕ່ວັນປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍ ການຈະລາຈອນທາງບົກ ສະບັບເລກທີ 02/ສພຊ ລົງວັນທີ 08 ເມສາ 2000.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້